## <u>ຄະນະຜູ້ຈັດທຳ ຄຳແນະນຳສຳລັບຄຣູສອນ</u>

**Copyright © 2014 by BAPTISTWAY PRESS®.**

**ສງວນລິກຂະສິດ**

ອະນຸຍາດໃຫ້ຄຣິສຕະຈັກເຮັດກ໊ອບປີ້ໄດ້ຕາມຄວາມຕ້ອງການ ເພື່ອໃຊ້ຢູ່ພາຍໃນຄຣິສຕະຈັກ. ຫ້າມຂາຍ, ຫ້າມແຈກຢາຍ, ຫລືໃຊ້ໃນທາງອື່ນ ໂດຍທີ່ບໍ່ໄດ້ຂຽນຄຳຮ້ອງຂໍອະນຸຍາດເສັຽກ່ອນ. ຖ້າຢາກຊາບລາຍລະອຽດເພີ້ມເຕີມກະຣຸນາຕິດຕໍ່ໄປທີ່ BAPTISTWAY PRESS, Baptist General Convention of Texas, 333 North Washington, Dallas, TX 75246-1798.

BAPTISTWAY PRESS® is registered in U.S. Patent and Trademark Office.

ຂໍ້ຄວາມພຣະຄັມພີອ້າງອີງໃນບົດຮຽນນີ້ໄດ້ຄັດມາຈາກປຶ້ມພຣະຄັມພີທີ່ໄດ້ບົ່ງຊື່ໄວ້ ລວມທັງການແປ, ແລະວັນທີຈົດທະບຽນສງວນລິກຂະສິດຂອງປຶ້ມພຣະຄັມພີເຫລົ່ານັ້ນ.

ພິມອອກຄັ້ງທຳອິດ: ເດືອນ ມີນາ 2004

BAPTISTWAY Management Team

Executive Director, Baptist General Convention of Texas: David Hardage
Director, Church Ministry Resources: Chris Liebrum
Director, Bible Study/Discipleship: Phil Miller

Publisher BAPTISTWAY PRESS®: Scott Stevens

Language Materials Team

Teaching Procedures Writer for Lesson 1, 2, 3
Bounhome Phommachanh, Lao-Thai Baptist, San Antonio, Texas
Editor for Lessons 1, 2, 3,
Phaisane Somsith, Homprakhoon Baptist Church, Dallas, Texas

Teaching Procedures Writer for Lesson 4, 5, 6
Bounchanh Vongsurith, Lao Congregation of First Baptist Church, Amarillo, TX
Editor for Lessons 4, 5, 6
Phaisane Somsith, Homprakhoon Baptist Church, Dallas, Texas

Teaching Procedures Writer for Lesson 7, 8, 9
Sidney Kahn, Saginaw Community Church, Fort Worth, Texas
Editor for Lessons 7, 8, 9
Phaisane Somsith, Homprakhoon Baptist Church, Dallas, Texas

Teaching Procedures Writer for Lesson 10, 11, 12, 13
Houmphanh Vongsurith, First Laotian Baptist Church, Dallas, Texas
Editor for Lessons 10, 11, 12, 13
Phaisane Somsith, Homprakhoon Baptist Church, Dallas, Texas

Facilitator for the LAOTIAN TEAM: Joe Haag

Patty Lane, Director, Office of Intercultural Initiatives, Baptist General Convention of Texas

# ຄຳແນະນຳສຳລັບຄຣູສອນ

# ບົດຮຽນທີ 1

# <u>ການຈັດຕຽມທີ່ຍິ່ງໃຫຍ່ຂອງພຣະເຈົ້າ</u>

---

**<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u>** ເອເຟໂຊ ບົດທີ 1

**<u>ພູມຫລັງຂອງພຣະຄັມພີ:</u>** ເອເຟໂຊ ບົດທີ 1

**<u>ຈຸດສຳຄັນສຳລັບບົດຮຽນນີ້:</u>** ການຈັດຕຽມຄວາມພົ້ນທີ່ຍິ່ງໃຫຍ່ໂດຍຜ່ານທາງພຣະເຢຊູ, ຜູ້ຊຶ່ງເປັນພຣະເຈົ້າທີ່ເໜືອທຸກສິ່ງຢ່າງ.

**<u>ຄຳຖາມເພື່ອການຄົ້ນຄວ້າ:</u>** ເປັນຫຍັງພວກເຮົາຈຶ່ງຄິດວ່າໜ້າທີ່ຂອງໂບດ ຫລືຄິດຫາຫລາຍເງື່ອນໄຂເມື່ອພວກເຮົາຫາກຮູ້ວ່າພຣະເຢຊູຊົງຈັດຕຽມຄວາມພົ້ນເພື່ອພວກເຮົາຢູ່ແລ້ວ.

**<u>ຈຸດປະສົງຂອງບົດຮຽນນີ້:</u>** ເພື່ອຈະໄດ້ຊີ້ແຈງເຖິງການຈັດຕຽມຄວາມພົ້ນທີ່ຍິ່ງໃຫຍ່ໂດຍຜ່ານທາງພຣະເຢຊູຄຣິດ

## <u>ແຜນສຳລັບການສິດສອນ</u>

### <u>ນຳເຣື່ອງເຂົ້າສູ່ຊີວິດຈິງ(ໃຊ້ເວລາ 5 ນາທີ)</u>

1. ປະກາດໃຫ້ຫ້ອງຮຽນຮູ້ວ່າ ອາທິດໜ້າຈະມີລາຍການພິເສດ. ແຕ່ລະຄົນຕ້ອງໄດ້ສະແດງກຳລັງໃຫ້ຄົນອື່ນເຫັນວ່າຕົວເອງເຮັດຫຍັງໄດ້ແດ່? ຜູ້ໃດຊິເຮັດຫຍັງແດ່? ຄິດຜູ້ລະ 2 ນາທີ. ແລ້ວບອກມາວ່າຈະສະແດງກຳລັງອັນໃດ ບອກໃຫ້ຜູ້ອື່ນຮູ້ນຳດ້ວຍ. ເມື່ອຖາມທຸກຄົນແລ້ວ ຄຣູກໍຈະແບ່ງປັນເຖິງກຳລັງຂອງພຣະເຈົ້າ ພຣະອົງມີຫຍັງໃຫ້ພວກເຮົາແດ່?

### <u>ນຳພາການສຶກສາພຣະທັມ (ໃຊ້ເວລາ 30)</u>.

2. ຄຣູຈະຕຽມການແບ່ງປັນ ແລະກ່າວສັ້ນໆກ່ຽວກັບເມືອງເອເຟໂຊ ໂດຍອີງໃສ່ເຈັ້ຍບົດຮຽນ.

3. ໃຫ້ຄົນທີ່ສມັກໃຈອ່ານພຣະຄັມພີ ເອເຟໂຊ 1:1-5 ແລະອີກຜູ້ນຶ່ງອ່ານ 1:6-10 ແລະກໍຂໍໃຫ້ທຸກຄົນເບິ່ງພຣະຄັມພີຂອງຕົນເອງແລະຕິດຕາມໄປນຳ. ບອກໃຫ້ນັກຮຽນຂີດກ້ອງຄຳວ່າພຣະເຈົ້າອວຍພຣະພອນຜູ້ທີ່ມີຄວາມເຊື່ອ
   ໃຫ້ອ່ານຊ້ຳຂໍ້ທີ 4 ອີກເທື່ອນຶ່ງ ແລ້ວໃຫ້ນັກຮຽນຕອບຂໍ້ສົນໃຈ. ແລະປະກອບສ່ວນ

4. ເອີ້ນຊື່ນັກຮຽນ ໃຫ້ອ່ານ ເອເຟໂຊ 1:11-14 ແບ່ງປັນແລະສົນທະນາໂດຍອີງໃສ່ເຈັ້ຍບົດຮຽນ ແລະຂໍໃຫ້ໃສ່ໃຈກ່ຽວກັບຄຳວ່າ ຕຶກາ ແປວ່າການເປັນເຈົ້າຂອງ. ຖາມ: ມີໃຜແດ່ທີ່ສາມາດຍົກຕົວຢ່າງກ່ຽວກັບຄຳວ່າ ຕຶກາ ແລະເປັນເຈົ້າຂອງ. ຕົວຢ່າງນີ້ ອາດຈະໃຊ້ຄຳວ່າໃບບິລ ເພາະຖ້າມີໃບບິລ ກໍແມ່ນເຮົາເປັນເຈົ້າຂອງໄດ້. ພຣະວິນຍານບໍຣິສຸດ ເປັນຜູ້ທີ່ເຮົາບໍ່ສາມາດເຫັນກັບຕາໄດ້. ພຣະວິນຍານຈະຕຶກາໄວ້ຢ່າງໃດ.

5. ເອເຟໂຊ 1:3-10 ກ່າວວ່າ ແມ່ນພຣະພອນອັນຍິ່ງໃຫຍ່ຫລວງຫລາຍສຳລັບຜູ້ທີ່ເຊື່ອ. ແລະໃນຂໍ້ທີ 11-14 ກ່າວວ່າພຣະອົງຊົງເລືອກພວກເຮົາມາຢ່າງໃດ. ແລະຊ່ວງຕໍ່ໄປ 1:15-23 ໂປໂລອ້ອນວອນເພື່ອຜູ້ທີ່ເຊື່ອທັງຫລາຍວ່າຢ່າງໃດ. ເພື່ອໃຫ້ພວກເຮົາເຂົ້າໃຈ ໃນຄຳສັນຍາທີ່ພຣະເຈົ້າໃຫ້ໄວ້ແກ່ຜູ້ ທີ່ເຊື່ອ. ໃຫ້ອີກຄົນນຶ່ງອ່ານ 1:15-23 ອີກເທື່ອນຶ່ງນີ້ເປັນຄຳອະທິຖານຂອງໂປໂລ ໃຫ້ຂິດກ້ອງພຣະພອນທີ່ພວກເຮົາໄດ້ຮັບ.

ໃຫ້ພວກເຮົາຫັນມາເບິ່ງອີກວ່າພຣະອົງໃຫ້ພວກເຮົາຮູ້ຂໍ້ເລິກລັບ ໃຫ້ພວກເຮົາມີສະຕິປັນຍາຮູ້ຈັກພຣະອົງດີຂຶ້ນ. ຖາມນັກຮຽນ: ແມ່ນໃຜເປັນໃຫຍ່ໃນໂບດ? ແມ່ນໃຜເປັນປະມຸກ? ແລະແມ່ນໃຜເປັນກາຍຂອງໂບດ? ແມ່ນໃຜສາມາດຊໍາຣະລ້າງພວກເຮົາໄດ້?

ໃຫ້ພວກເຮົາຄິດນຳກັນອີກແລ້ວກໍສົນທະນາ ແມ່ນຫຍັງແດ່ທີ່ຈະສາມາດປ່ຽນແປງແລະຮັປກັນພວກເຮົາໄດ້? ໂບດບໍ່? ຫ້ອງຮຽນບໍ່? ຕົວທ່ານເອງບໍ່? ການກະທຳບໍ່?

## <u>ນຳບົດຮຽນໄປໃຊ້ໃນຊີວິດ (ໃຊ້ເວລາ 15 ນາທີ</u>

6. ຮຽກຮ້ອງ ທວນຄືນບາດກ້າວແລກທີ່ພວກເຮົາເວົ້າກັນມາ. ແມ່ນໃຜຈະມີພລັງເໜືອກວ່າໝູ່? ພຣະເຈົ້າຊົງສັນຍາວ່າຈະປະທານພຣະວິນຍານບໍຣິສຸດໃຫ້ແກ່ຜູ້ທີ່ເຊື່ອທັງຫລາຍ ແລະຈະຊົດຊ່ວຍທຳງານໃນຕົວບຸກຄົນນັ້ນ. ຄິດເຖິງອຳນາດພຣະວິນຍານບໍຣິສຸດຂອງພຣະເຈົ້າ ທີ່ທຳງານໃນພວກເຮົາທຸກຄົນ.
7. ຂໍໃຫ້ທຸກຄົນຄິດແລະແບ່ງປັນແກ່ທຸກຄົນ ຖ້າພໍເປັນໄປໄດ້.
8. ອ້ອນວອນອະທິຖານ ຕຽມຕົວເຂົ້າເຝົ້າພຣະເຈົ້າ

*ບພ*

# ຄຳແນະນຳສຳລັບຄຣູສອນ
# ບົດຮຽນທີ 2
# ຄວາມຮັກຂອງພຣະເຈົ້າເຮັດໃຫ້ແຕກຕ່າງ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ເອເຟໂຊ 2:1-10

**ພູມຫລັງຂອງພຣະຄັມພີ:** ເອເຟໂຊ 2:1-10

**ຈຸດສຳຄັນສຳລັບບົດຮຽນນີ້:** ມີແຕ່ຄວາມຮັກ, ຄວາມເມດຕາ, ແລະພຣະຄຸນຂອງພຣະເຈົ້າເທົ່ານັ້ນ, ບໍ່ແມ່ນຍ້ອນຄວາມດີຂອງພວກເຮົາ ທີ່ເຮັດໃຫ້ພວກເຮົາມີຄວາມແຕກຕ່າງ.

**ຄຳຖາມເພື່ອການຄົ້ນຄວ້າ:** ຄວາມເມດຕາຂອງພຣະເຈົ້າຢູ່ໃສ? ພຣະຄຸນຂອງພຣະເຈົ້າຢູ່ໃສ? ຄວາມຮັກຂອງພຣະເຈົ້າຢູ່ໃສ? ພວກເຮົາເຄີຍມີປະສົບການໃນສິ່ງເຫລົ່ານີ້ບໍ່?

**ຈຸດປະສົງຂອງບົດຮຽນນີ້:** ເພື່ອຈະອະທິບາຍເຖິງຄວາມແຕກຕ່າງທີ່ພຣະເຈົ້າຊົງມີຄວາມເມດຕາ, ຄວາມຮັກ, ແລະພຣະຄຸນ ທີ່ມີຕໍ່ຊີວິດຂອງພວກເຮົາໃນປັດຈຸບັນແລະຕລອດໄປ.

## ແຜນສຳລັບການສິດສອນ

## ນຳເຣື່ອງເຂົ້າສູ່ຊີວິດຈິງ (ໃຊ້ເວລາ 5 ນາທີ)

1. ທຸກຄົນຄົງຈະເຄີຍເຫັນຊີເນມາ, ທີວີ, ວີດີໂອເກມຫລືປຶ້ມ ຫລາຍເຣື່ອງລາວພວກເຂົາມັກຈະສ້າງຂຶ້ນມາເພື່ອໂນ້ມໃຈຂອງມະນຸດໃຫ້ອອກຈາກພຣະເຈົ້າ. ແຕ່ວ່າໃຫ້ຄຣູບອກນັກຮຽນວ່າວັນນີ້ພວກເຮົາຈະໄດ້ສຶກສາກ່ຽວກັບເຣື່ອງຄວາມເມດຕາກະຣຸນາ, ພຣະຄຸນ, ແລະຄວາມຮັກຂອງພຣະເຈົ້າ ບໍ່ກ່ຽວກັບຄວາມດີ ແລະການກະທຳດີ ຊຶ່ງເຮັດໃຫ້ເກີດຄວາມແຕກຕ່າງໃນໂບດ ແລະໃນຊີວິດຂອງພວກເຮົາເອງ.

## ນຳພາການສຶກສາພຣະທັມ (ໃຊ້ເວລາ 30)

2. ອ່ານເອເຟໂຊ 2:1-3 ນຳພາຫ້ອງຮຽນ ສົນທະນາ ຖົກຖຽງ ເຣື່ອງຄວາມບາບ. ຂຽນຄວາມບາບລົງໃນກະດານ ໃຫ້ນັກຮຽນອອກຄວາມຄິດເຫັນຊ່ອຍ.
   ຖາມ: ຄວາມບາບອັນໃດໃຫຍ່ກວ່າໝູ່? ຄວາມບາບອັນໃດໜ້ອຍກວ່າໝູ່? ເຮົາຈະລຽງລຳດັບແບບໃດ?
   ທ່ານຮູ້ບໍ່ວ່າທ່ານເຄີຍເຮັດບາບໃດມາແດ່? ຄວາມບາບເຫລົ່ານັ້ນ ມັນໜີໝົດແລ້ວບໍ່?

ໃຫ້ທຸກຄົນຕັ້ງໃຈຟັງ ວ່າຕາຍໃນຄວາມບາບແມ່ນຕາຍຢ່າງໃດ? (2:1-3)
ທ່ານເຄີຍຄິດບໍ່ວ່າ ທຸກຄົນກໍເຮັດຄືກັນ ແລະເປັນຄືກັນໝົດ?
ທ່ານເຄີຍມີແຜນການທີ່ຈະລົບລ້າງມັນບໍ່? ລົບລ້າງຢ່າງໃດ? ເພື່ອຈະໄດ້ຊີວິດທີ່ບໍຣິສຸດຄືນມາ?

3. ເຊີນຄົນນຶ່ງອ່ານເອເຟໂຊ 2:4-7 ແລ້ວວາງຄຳຖາມ:ທ່ານມີປະສົບການຢ່າງໃດເມື່ອທ່ານທາກຕ້ອງການໆຊ່ວຍເຫລືອ ແລະກໍຕ້ອງແມ່ນຄົນອື່ນ ບໍ່ແມ່ນຕົວທ່ານເອງ? ທ່ານເຄີຍຄິດເຖິງສະຖານທີ່ແລະເວລາວ່າມີທີ່ໃດບໍ່? ພວກເຮົາຍັງຈະຄິດເຖິງຖ້ອຍຄຳຂອງພຣະເຈົ້າຢູ່ບໍ່?

4. ອີກຄົນນຶ່ງອ່ານ ເອເຟໂຊ 2:8-10 ບອກຫ້ອງຮຽນໃຫ້ຕັ້ງໃຈຟັງຂໍ້ 8 ແລະກໍເວົ້າວ່າພວກເຮົາບໍ່ໄດ້ຮັບຄວາມປອດພັຍຍ້ອນການກະທຳດີຂອງພວກເຮົາດອກ ແຕ່ພວກເຮົາຈະໄດ້ຮັບຄວາມປອດພັຍແມ່ນພຣະຄຸນຂອງພຣະເຈົ້າ ໂດຍທາງຄວາມເຊື່ອ.
ຖາມ:ແມ່ນຫຍັງຄືຄວາມແຕກຕ່າງຣະຫວ່າງການກະທຳດີເພື່ອຈະໄດ້ຮັບຄວາມພົ້ນແລະການເຮັດດີເພື່ອການຂອບພຣະຄຸນແລ້ວເຮົາຈະໄດ້ຮັບຄວາມພົ້ນ?
ຫລາຍທ່ານຄົງຈະຄິດວ່າ ກໍໃຊ້ໄດ້ທັງນັ້ນ ການກະທຳດີ ຫລືການເປັນຄົນດີ ມັນກໍໄດ້ຂຶ້ນສວັນໄດ້.
ແລ້ວ. ຄຳເວົ້ານີ້ຖືກຕ້ອງບໍ່? ສົນທະນາກັນ.

## <u>ນຳບົດຮຽນໄປໃຊ້ໃນຊີວິດ (ໃຊ້ເວລາ 15 ນາທີ)</u>

5. ບົດສະລຸບ “ຂໍ້ແນະນຳ ແລະ ການກະທຳ” ໃນເຈັ້ຍບົດຮຽນ. ຄຳສອນໃນວັນນີ້ແມ່ນບອກໃຫ້ພວກເຮົາປະຕິບັດຕໍ່ກັນແລະກັນ.
ທ່ານຄິດແລ້ວບໍ່ວ່າ ໂບດຂອງທ່ານໄດ້ເຮັດສິ່ງນີ້ແລ້ວ?

6. ຢາຍເຈັ້ຍໃຫ້ແຕ່ລະຄົນ ແລ້ວໃຫ້ຂຽນຄວາມບາບທີ່ລົບກວນທ່ານຢູ່ປັດຈຸບັນນີ້ ຄືອັນໃດ?

7. ພຣະເຈົ້າກຽດຊັງຄວາມບາບ “ໃຫຍ່ ຫລື ນ້ອຍ” ກໍແມ່ນບາບ. ແຕ່ພຣະເຈົ້າຊົງຮັກທ່ານ. ທ່ານຈະຄິດຢ່າງໃດກັບພຣະເຈົ້າ ພຣະອົງຊົງມີຄວາມເມດຕາຕໍ່ພວກເຮົາຫລາຍ.
ພຣະອົງຊົງມີພຣະຄຸນອັນຍິ່ງໃຫຍ່ທີ່ ຈະອະພັຍບາບໃຫ້ພວກເຮົາໄດ້. ທ່ານຈະວ່າຢ່າງໃດ?

*ບພ*

# ຄຳແນະນຳສຳລັບຄຣູສອນ
# ບົດຮຽນທີ 3
# <u>ຄຣິສຕະຈັກຕ້ອງເປັນນຶ່ງ</u>

---

**<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u>** ເອເຟໂຊ 2:11-22

**<u>ພູມຫລັງຂອງພຣະຄັມພີ:</u>** ເອເຟໂຊ 2:11-22

**<u>ຈຸດສຳຄັນສຳລັບບົດຮຽນນີ້:</u>** ພຣະເຈົ້າ-ພຣະເຢຊູຄຣິດ ຊົງກະທຳໃຫ້ເຂົ້າມາເປັນອັນນຶ່ງອັນດຽວກັນ ຊຶ່ງເມື່ອກ່ອນເຄີຍຢູ່ຫ່າງໄກກັນ, ເຄີຍບໍ່ລົງຮອຍກັນ, ເຄີຍກຽດຊັງກັນ.........

**<u>ຄຳຖາມເພື່ອການຄົ້ນຄວ້າ:</u>** ຖ້າຄວາມເປັນອັນນຶ່ງອັນດຽວກັນຫາກສຳຄັນໃນຊີວິດຄຣິສຕຽນ, ເປັນຫຍັງໂບດທົ່ວໆໄປຈຶ່ງບໍ່ເປັນອັນນຶ່ງອັນດຽວກັນ? ເປັນຫຍັງຈຶ່ງຊອກຫາໂບດດັ່ງກ່າວນີ້ຍາກແທ້?

**<u>ຈຸດປະສົງຂອງບົດຮຽນນີ້:</u>** ເພື່ອຈະອະທິບາຍເຖິງຄວາມເປັນອັນນຶ່ງອັນດຽວ ຊຶ່ງພຣະເຈົ້າຊົງກະທຳໂດຍຜ່ານທາງພຣະເຢຊູ ພວກເຮົາຈະເລີ້ມແລະກ້າວຕໍ່ໄປຢ່າງໃດ

## <u>ແຜນສຳລັບການສອນ</u>

## <u>ນຳເຣື່ອງເຂົ້າສູ່ຊີວິດຈິງ (ໃຊ້ເວລາ 5 ນາທີ)</u>

8. ຂຽນຄຳວ່າ ຄົນຕ່າງຊາດໃສ່ກະດານ ແລ້ວໃຫ້ນັກຮຽນສົນທະນາກັນເວົ້າເຖິງຄວາມໝາຍ ອາດຈະມີຄວາມຄິດເຫັນແຕກຕ່າງກັນໄປ. ຫລັງຈາກສອງສາມນາທີແລ້ວຄຣູຈະວາງຄຳຖາມຕໍ່ໄປນີ້: ທ່ານເຄີຍເປັນຄົນຕ່າງຊາດບໍ່? ໃນຫ້ອງຮຽນຂອງພວກເຮົາມີຄົນຕ່າງຊາດບໍ່? ທ່ານເຄີຍຄິດເຫັນຄົນຕ່າງຊາດບໍ່?

9. ແຕ່ລະຄົນໃນພວກເຮົາອາດຈະເປັນຄົນຕ່າງຊາດເພາະມາຈາກແຕ່ລະຖິ່ນແຕ່ລະປະເທດ. ໃນວັນນີ້ພວກເຮົາຈະມາຮຽນຮູ້ວ່າ ພຣະເຈົ້າພຣະເຢຊູຄຣິດຈະປ່ຽນແປງພວກເຮົາຢ່າງໃດ.

## <u>ນຳພາການສຶກສາພຣະທັມ (ໃຊ້ເວລາ 30)</u>

10. ອ່ານເອເຟໂຊ 2:11-13 ເບິ່ງໃນເຈ້ຍບົດຮຽນ ຈະເຫັນຄວາມສັມພັນຣະຫວ່າງຄົນຢິວແລະຄົນຕ່າງຊາດເປັນຢ່າງໃດໃນສັຕວັດແຣກ. ສົມທຽບກັບຄວາມສັມພັນໃນປະເທດສະຫະຣັດອະເມຣິກາໃນປັດຈຸບັນນີ້.

ໃຫ້ຜູ້ທີ່ສມັກໃຈອ່ານພຣະຄັມພີພຣະບັນຍັດສອງ 10:16; 30:6; ໂຣມ 2:29; ໂກໂລຊາຍ2:11-12.

11. ອ່ານເອເຟໂຊ 2:14-18 ອະທິບາຍຖ້ອຍຄໍາ ເຫລົ່ານີ້ໂດຍອີງໃສ່ເຈ້ຍບົດຮຽນ ແລະໃນປຶ້ມອະທິບາຍພຣະຄັມພີ ຖາມ: ໃນຂໍ້ 16 ນີ້ ຄໍາວ່າເປັນປໍຣະປັກແມ່ນໝາຍເຖິງໃຜ? ໝາຍເຖິງພຣະເຈົ້າແລະມະນຸດ, ໝາຍເຖິງກຸ່ມຊົນປໍຣະປັກຕໍ່ກັນບໍ່? ຫລື ໝາຍເຖິງຄົນຍິວແລະຄົນຕ່າງຊາດບໍ່? ເມື່ອຄິດເຖິງກຸ່ມຊົນທີ່ຢູ່ກັບພວກເຮົາເດພວກທ່ານຄິດວ່າຢ່າງໃດ? ມີການປໍຣະປັກຕໍ່ກັນທາງດ້ານອາຍຸບໍ່? ທ່ານຄິດວ່າຢູ່ໂບດເຮົາກໍຍັງມີການປໍຣະປັກກັນຢູ່ບໍ່? ສືບຕໍ່ສົນທະນາກັນຕໍ່ໄປ ພວກເຮົາຮວມກັນເປັນໂບດໄດ້ຢ່າງໃດ? ແມ່ນໃຜເປັນຫລັກໃຫ້ພວກເຮົາ?

12. ພວກເຮົາຍັງຄິດຢູ່ບໍ່ວ່າ ມີອັນໃດກັ້ນຂວາງພວກເຮົາຢູ່? ສິ່ງຂວາງກັ້ນນັ້ນພວກເຮົາຈະເຮັດຢ່າງໃດ?

13. ອ່ານເອເຟໂຊ 2:19:22 ຫລັງຈາກນັ້ນຄຣູຈະຢາຍຂໍ້ພຣະຄັມພີໃຫ້ແກ່ນັກຮຽນຕໍ່ໄປນີ້: ປຖກ. 12: 2-3; ພສສ 67:1-2; ອຊຢ. 42:6; 49:6; ມທ. 26:19-20; ລກ. 2:28-32; 24:46-47; ກຈ. 1:8; 13:47 ຫລັງຈາກນັ້ນຄຣູຈະວາງຄໍາຖາມ ພວກທ່ານຄິດຢ່າງໃດກ່ຽວກັບຂໍ້ພຣະຄັມພີນີ້. ນີ້ບໍ່ແມ່ນແຜນການຂອງພຣະເຈົ້າທີ່ຕາມຫາພວກເຮົາບໍ່?

14. ຈຸດສໍາຄັນຂອງ ເອເຟໂຊ 2:22 ໂປໂລກ່າວວ່າ ຍ້ອນຣິດເດດຂອງພຣະວິນຍານບໍຣິສຸດພວກເຮົາຈຶ່ງໄດ້ເຈົ້າມາຫາກັນ. ສົນທະນາ, ພຣະເຈົ້ານໍາພວກເຮົາມາທີ່ນີ້ໄດ້ຢ່າງໃດ? ພຣະອົງຕ້ອງການຫຍັງ?

## <u>ນໍາບົດຮຽນໄປໃຊ້ໃນຊີວິດ (ໃຊ້ເວລາ 15 ນາທີ)</u>

15. ຈົ່ງພາກັນນໍາເອົາບົດຮຽນນີ້ໄປໃຊ້ ຈົ່ງພິຈາຣະນາ ແລ້ວຝຶກຝົນຕົນເອງ.

16. ອ້ອນວອນອະທິຖານຕຽມຕົວເຂົ້າເຝົ້າພຣະເຈົ້າ

*ບພ*

# ຄຳແນະນຳສຳລັບຄຣູສອນ
# ບົດຮຽນທີ 4
# <u>ການປະກາດ, ຄວາມຕ້ອງການຂອງຄຣິສຕະຈັກ</u>

---

**<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u>** ເອເຟໂຊ 3

**<u>ພູມຫລັງຂອງພຣະຄັມພີ:</u>** ເອເຟໂຊ 3

**<u>ຈຸດສຳຄັນຂອງບົດຮຽນນີ້:</u>** ພຣະເຈົ້າໄດ້ສັ່ງໃຫ້ຄຣິສຕະຈັກປະກາດ, ຄຣິສຕະຈັກຕ້ອງການພລັງຈາກພຣະເຈົ້າ ເພື່ອໃຫ້ຄວາມຮັກຂອງອົງພຣະຄຣິດດຳລົງຢູ່ໃນຊີວິດຂອງຜູ້ທີ່ເຊື່ອ.

**<u>ຄຳຖາມເພື່ອການຄົ້ນຄວ້າ:</u>** ພວກເຮົາຈຳເປັນອ້ອນອະທິຖານຫຍັງແດ່ເພື່ອຄຣິສຕະຈັກຂອງພວກເຮົາ?

**<u>ຈຸດປະສົງຂອງບົດຮຽນ</u>**: ເພື່ອສຳຣວດກວດເບິ່ງວ່າພຣະເຈົ້າໄດ້ສັ່ງໃຫ້ຄຣິສຕະຈັກປະກາດ ແລະຊອກຫາທາງເພື່ອຄຣິສຕະຈັກຈະມີພລັງເຮັດໜ້າທີ່ຂອງຕົນໃຫ້ສຳເຣັດ.

## ບົດນຳ

ຖ້າພວກເຮົາອ່ານພຣະຄັມພີໃໝ່ແລະຄຶດເຖິງຄຳປຽບທຽບພວກເຮົາກໍຈະໄດ້ຮັບຄວາມເຂົ້າໃຈຫລາຍຂຶ້ນຢ່າງແປກປລາດ. ເມື່ອເອົາຄຳປຽບທຽບມາໃຊ້ພວກເຮົາຈະເຫັນວ່າຄວາມຄຶດ, ຄຳຂວັນ, ຫລືເຣື່ອງຕ່າງໆບໍ່ຄືກັນນັ້ນຈະຮ່ວມເຂົ້າກັນເປັນຢ່າງດີ ຖ້າພວກເຮົາຫັນກັບຄືນໄປກ້າວນຶ່ງ ພວກເຮົາຈະເຫັນພາບໃຫຍ່ແລະກວ້າງໄກດີ.

ປຶ້ມເອເຟໂຊບົດ 3 ພວກເຮົາຈະເຫັນຄຳປຽບທຽບຢ່າງຫລວງຫລາຍ. ໃນບົດນີ້ຜູ້ອ່ານໄດ້ພົບເຫັນຄຳຂຽນຂອງອາຈານໂປໂລທີ່ໃຊ້ການປຽບທຽບຫລາຍເພື່ອຜູ້ອ່ານຈະເຂົ້າໃຈເຖິງຈຸດປະສົງຂອງຜູ້ຂຽນ.

ພາກສ່ວນການຂຽນຂອງອາຈານໂປໂລທີ່ຂຽນໄປເຖິງຄຣິສະຕຽນໃນເມືອງເອເຟໂຊນີ້, ອາຈານໂປໂລໄດ້ຂຽນໂດຍໃຊ້ການປຽບທຽບຊຶ່ງປະກອບຮ່ວມກັບຄົນຕ່າງດ້າວດ້ວຍ-ຜູ້ເຂົ້າມາເຊື່ອໃນພຣະເຈົ້າ. ແຕ່ກ່ອນເປັນພວກຕ່າງຊາດໄດ້ຢູ່<u>ທາງນອກ</u> ແລະເວລານີ້ພວກເຂົາໄດ້ເຂົ້າມາ<u>ພາຍໃນ</u> (ເບິ່ງ ອຟຊ 3:6). ສມັຍກ່ອນອາຈານໂປໂລເຄີຍເປັນຜູ້ນຳໃນສາສນາຂອງພວກຢິວ ແລະດຽວນີ້ເພິ່ນຖືຕົນເອງວ່າເປັນຂ້າໃຊ້ຂອງພຣະຜູ້ເປັນເຈົ້າເປັນຜູ້ນ້ອຍທີ່ສຸດໃນຖ້າມກາງຜູ້ຮັບໃຊ້ທັງຫລາຍ (ເບິ່ງ ອຟຊ 3:7-8). ຄວາມເລິກລັບໄດ້ມີຂຶ້ນເລີ້ມແຕ່ການຊົງສ້າງ ແຕ່ດຽວນີ້ອາຈານໂປໂລໄດ້ມີຄຳຕອບຕໍ່ຄຳທວາຍນັ້ນ (ເບິ່ງ 3:9). ຄຣິສຕະຈັກໄດ້ຮັບພຣະກະຣຸນາຄຸນຈາກພຣະເຈົ້າ, ແຕ່ເຫັນວ່າຄຣິສຕະຈັກນັ້ນມີຄວາມຕ້ອງການພຣະຄຸນຈາກພຣະເຈົ້າຫລາຍທີ່ສຸດ. (ເບິ່ງ 3:16).

ຍັງມີການໃຊ້ຄຳປຽບທຽບຢ່າງອື່ນອີກໃນປຶ້ມຂ່າວປະເສີດທີ່ສອນເຖິງການຢູ່ດີກິນແຊບຂອງຊີວິດ ແລະ ກໍເຣື່ອງຄວາມທຸກເວທະນາຂອງຜູ້ເຂົ້າມາເປັນລູກຂອງພຣະເຈົ້າເຊັ່ນກັນ. ອາຈານໂປໂລສອນໃຫ້ຜູ້ເຂົ້າມາເຊື່ອໃນອົງພຣະເຢຊູວ່າພວກເຂົາຍັງຈະມີຄວາມທຸກເວທະນາເກີດຂຶ້ນກັບຊີວິດ ເຖິງຈະເປັນຜູ້ຕິດຕາມແລະເຊື່ອ ແຕ່ເພິ່ນໜູນໃຈບໍ່ໃຫ້ຍ້ານກົວຫລືໝົດກຳລັງໃຈຕໍ່ສິ່ງເຫລົ່ານັ້ນ (ເບິ່ງ 3:13)

ເມື່ອທ່ານແລະເພື່ອນໆສຶກສາປຶ້ມເອເຟໂຊ ບົດ 3, ຈົ່ງຍອມໃຫ້ເຣື່ອງທີ່ທ່ານສຶກສານີ້ຊ່ອຍເປີດ**ສາຍ**ຕາຂອງທ່ານໃຫ້ກວ້າງໄກເພື່ອທ່ານຈະໄດ້ເຂົ້າໃຈເຖິງເຣື່ອງຂອງພຣະເຈົ້າດີຂຶ້ນ. ຖ້າເຮັດດັ່ງນັ້ນໄດ້ຈະເປັນການສ້າງຄວາມສັມພັນໃນການນະມັສການແບບໃໝ່ກັບພຣະເຈົ້າ.

## ແນະນຳການສອນ

### ແຜນການສອນ-ວິທີສອນນັ້ນອາດສາມາດໃຊ້ແຕກຕ່າງກັນ

1. ນຳເອົາເຂົ້າໜົມອົມມາໃນຫ້ອງຮຽນ ບອກໃຫ້ທຸກຄົນຮູ້ວ່າທ່ານເອົາມາເພື່ອແບ່ງປັນກັນທຸກຄົນ ແຕ່ເຫັນວ່າສິ່ງທີ່ຈະປັນນັ້ນມີຄ່າຫລາຍ. ຖາມຄວາມເຫັນຈາກຫ້ອງຮຽນວ່າຈະແບ່ງປັນກັບໃຜ ແລະຫ້າມບໍ່ໃຫ້ກັບຜູ້ໃດແດ່? ຫລັງຈານນັ້ນແລ້ວໃຫ້ຖາມອີກວ່າເຣື່ອງຂ່າວປະເສີດເຖິງພຣະຄຸນ ແລະຄວາມຮັກຂອງພຣະເຈົ້ານັ້ນຄວນຈະແບ່ງປັນໃຫ້ຜູ້ໃດແດ່? ແລະມີຜູ້ໃດບໍ່ທີ່ທ່ານບໍ່ຄວນແບ່ງປັນໃຫ້? ໃຫ້ລົມທະກັນເຖິງເຣື່ອງນີ້ໃຫ້ລະອຽດ.

2. ບອກໃຫ້ທຸກຄົນໃນຫ້ອງຮຽນອ່ານເອເຟໂຊ 3:1-13 ແລະໃຫ້ສະມາຊິກບອກເຖິງສິ່ງທີ່ອາຈານໂປໂລຖືວ່າເປັນສິ່ງສຳຄັນໃນການປະກາດຂອງເພິ່ນ. ຖາມວ່າໃນຄຣິສຕະຈັກຂອງພວກເຂົານັ້ນມີຄຳຂວັນທີ່ເວົ້າເຖິງໂຄງການປະກາດບໍ່? ຖ້າບໍ່ມີກໍໃຫ້ພາກັນອອກຄວາມຄິດຄວາມເຫັນຊຽນອອກມາເປັນປໂຍກສັ້ນໆ ເຂົ້າໃຈງ່າຍເພື່ອຈະທ່ອງຈຳເອົາໄວ້.

3. ອະທິບາຍຄວາມໝາຍແລະໃຈຄວາມສຳຄັນໃນ ບົດ 3:1-13 ໂດຍໃຊ້ປຶ້ມອະທິບາຍຊ່ອຍ.

4. ຂໍຮ້ອງໃຫ້ຄົນນຶ່ງອ່ານ ເອເຟໂຊ ບົດທີ 3:14-22 ແລະບອກທຸກຄົນຟັງຄຳອ້ອນວອນອະທິຖານຂອງອາຈານໂປໂລໃນຕອນນີ້.

5. ສັງເກດເບິ່ງຄຳອະທິຖານອ້ອນວອນຂອງອາຈານໂປໂລທີ່ກ່າວເຖິງການຂໍໃຫ້ມີພລັງ, ຄວາມຮັກ ແລະອຳນາດທີ່ຈະຢູ່ເປັນພະຍານເຣື່ອງຂອງພຣະເຈົ້າຕໍ່ຄົນອື່ນ. ແບ່ງຫ້ອງຮຽນອອກເປັນສາມກຸ່ມ ບອກໃຫ້ກຸ່ມນຶ່ງສຶກສາເຖິງຄວາມເວົ້າ: ພລັງ, ກຸ່ມສອງ ສຶກສາເຣື່ອງຄວາມຮັກ ແລະກຸ່ມສາມສຶກສາເຣື່ອງອຳນາດ. ຫລັງຈາກນັ້ນແລ້ວໃຫ້ແຕ່ລະກຸ່ມເລືອກເອົາຜູ້ຕ່າງໜ້າເພື່ອລາຍງານໃຫ້ທຸກຄົນໄດ້ຍິນນຳກັນ.

6. ຕັ້ງຄຳຖາມວ່າມີຜູ້ໃດໃນຫ້ອງຮຽນ   ເຄີຍອອກໄປກັບຄົນອື່ນໃນຄຣິສຕະຈັກປະກາດເຣື່ອງຂ່າວປະເສີດພາຍໃນປະເທດ ຫລືຕ່າງປະເທດບໍ່?  ຖ້າມີຂໍໃຫ້ຄົນນັ້ນກ່າວຄຳພະຍານເຖິງສິ່ງຕົນເອງໄດ້ປະສົບການເພື່ອໜູນໃຈຄົນອື່ນໆບໍ່ໃຫ້ຢ້ານໃນການອອກໄປປະກາດ.

7. ປິດໂດຍການອ້ອນວອນ   ແລະແຈກຢາຍເຂົ້າໜົມອົມໃຫ້ແຕ່ລະຄົນ ແລະບອກວ່າທຸກຄົນໃນໂລກຕ້ອງການຂ່າວປະເສີດ ແລະໜູນໃຈໃຫ້ທຸກຄົນໃຫ້ມີຄວາມກ້າຫານໃນການປະກາດນີ້.

*ບອ*

# ຄຳແນະນຳສຳລັບຄຣູສອນ
# ບົດຮຽນທີ 5
# <u>ຄຣິສຕະຈັກໄດ້ເຮັດໜ້າທີ່ສຳເຣັດລົງ</u>

---

**<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u>** ເອເຟໂຊ 4

**<u>ພູມຫລັງຂອງພຣະຄັມພີ:</u>** ເອເຟໂຊ 4

**<u>ຈຸດສຳຄັນຂອງບົດຮຽນນີ້:</u>** ຄຣິສຕະຈັກຈຳເປັນຕ້ອງມີຊີວິດຢູ່ໃຫ້ສົມກັບໄດ້ຖືກເອີ້ນໃຫ້ເປັນຮ່າງກາຍຂອງອົງພຣະຄຣິດ.

**<u>ຄຳຖາມເພື່ອການຄົ້ນຄວ້າ:</u>** ຄຣິສຕະຈັກຂອງທ່ານໄດ້ສະແດງຄຸນສົມບັດອອກມາຢ່າງໃດໃນຖານະເປັນຮ່າງກາຍຂອງອົງພຣະຄຣິດ?

**<u>ຈຸດປະສົງຂອງບົດຮຽນ</u>**: ເພື່ອສຳຣວດກວດເບິ່ງຄຸນສົມບັດແລະການສະແດງຕົວອອກມາວ່າຄຣິສຕະຈັກເປັນຮ່າງກາຍຂອງອົງພຣະຄຣິດ.

## ບົດນຳ

ເມື່ອໄດ້ສຶກສາສາມບົດທີແລກໃນປຶ້ມເອເຟໂຊ ສະມາຊິກບໍ່ຄວນແປກໃຈເມື່ອອາຈານໂປໂລໄດ້ປ່ຽນທິດທາງໃນການຂຽນຂອງເພິ່ນ. ມາຮອດນີ້ອາຈານໂປໂລໄດ້ກ່າວເຖິງເຣື່ອງພາຣະກິດໃຫຍ່ທີ່ພຣະເຈົ້າໄດ້ກະທຳຜ່ານທາງອົງພຣະເຢຊູຄຣິດ. ນັກປະກາດຜູ້ຍິ່ງໃຫຍ່ຄົນນີ້ໄດ້ຊົມຊື່ນຍິນດີທີ່ໄດ້ພົບກັບພຣະຄຸນອັນມະຫາສານຈາກພຣະເຈົ້າ ແລະຄວາມພົ້ນທີ່ມີຢູ່ໃນອົງພຣະເຢຊູແຕ່ອົງດຽວ. ເພິ່ນໄດ້ເນັ້ນເຖິງຄວາມຮັກອັນອັມມະຕະທີ່ພຣະເຈົ້າມີຕໍ່ຄົນທີ່ມາເຕົ້າໂຮມກັນເປັນຄຣິສຕະຈັກຂອງພຣະເຈົ້າ. ໃນຖ້າມກາງພຣະຄຸນແລະຄວາມຮັກຂອງພຣະເຈົ້າ ພຣະອົງໄດ້ປະທານກຳລັງໃຫ້ຄຣິຕະຈັກຮ່ວມໄມ້ຮ່ວມມືເປັນອັນນຶ່ງອັນດຽວກັນໃນຄອບຄົວຂອງຜູ້ທີ່ເຊື່ອໃນພຣະເຈົ້າ ຕາມທີ່ພຣະອົງສ້າງພວກເຂົາໃຫ້ເປັນເຊັ່ນນັ້ນ.

ໃນບົດ 4 ຈົດໝາຍຂອງອາຈານໂປໂລໄດ້ປ່ຽນທິດທາງໃຫ້ເອີ້ນຄຣິສຕະຈັກຕອບສະໜອງຕໍ່ສິ່ງທີ່ອົງພຣະເຢຊູຄຣິດໄດ້ເຮັດເພື່ອ. ທັມມະດາແລ້ວຈົດໝາຍຂອງອາຈານໂປໂລບໍ່ໄດ້ພຽງແຕ່ສົນທະນາກັນເທົ່ານັ້ນ, ຫລືພຽງແຕ່ກ່າວເຖິງພລັງຂອງພາຣະກິດຂອງພຣະເຈົ້າຜ່ານທາງອົງພຣະເຢຊູຄຣິດ. ຄຣິສຕະຈັກຈະບໍ່ເປັນຄຣິສຕະຈັກເທື່ອຈົນສະມາຊິກໃນຄຣິສຕະຈັກຕອບສນອງຕໍ່ຄຳເອີ້ນຈາກພຣະເຈົ້າໃຫ້ເຮັດໜ້າທີ່ຈົນສຳເຣັດ. ເໝືອນກັບການນະມັສການໃນຄຣິສຕະຈັກຫລາຍແຫ່ງ, ອາຈານໂປໂລໄດ້ປ່ຽນຈາກການຍົກຍ້ອງສັຣເສີນໃຫ້ເປັນການເອີ້ນໃຫ້ຖວາຍຕົວຢ່າງເອົາໃຈໃສ່.

ການເອີ້ນໃຫ້ຕອບສນອງຕໍ່ສິ່ງທີ່ພຣະເຈົ້າໄດ້ກະທຳເລີ້ມຕົ້ນໃນບົດ 4 ນີ້ອາຈານໂປໂລໄດ້ໃຊ້ຄຳເວົ້າປ່ຽນທິດທາງໂດຍໃຫ້ຄຳເວົ້າ “ເຫດສັນນັ້ນ” (ອຟຊ 4:1) ໄດ້ສອນຜູ້ອ່ານຢ່າງແຈ່ມແຈ້ງວ່າໃຫ້ເອົາໃຈໃສ່ໃນສິ່ງທີ່ຕໍ່ໄປຈົນໃຫ້ສຳເຣັດລົງ ເພາະວ່າພຣະເຈົ້າ “ຜູ້ໄດ້ໂຜດປະທານພຣະພອນທຸກປະການດ້ານວິນຍານໃຫ້

ແກ່ເຮົາທັງຫລາຍໃນສວັນສະຖານໂດຍພຣະຄຣິດ" (ອຟຊ 1:3), "ເຫດສັນນັ້ນ" (4:1) ພວກເຮົາຕ້ອງຕອບສນອງໃຫ້ເປັນຄຣິສຕະຈັກຊຶ່ງເຕັມໄປດ້ວຍຄວາມເຊື່ອ.

## ແນະນຳການສອນ

### ແຜນການສອນ-ວິທີສອນນັ້ນອາດສາມາດໃຊ້ແຕກຕ່າງກັນ

8. ເລີ້ມຫ້ອງຮຽນຢາຍເຈັ້ງໃຫ້ສະມາຊິກໃນຫ້ອງບອກໃຫ້ຂຽນລົງ "10 ຢ່າງທີ່ເຮັດໃຫ້ຂ້າພະເຈົ້າເບື່ອກ່ຽວກັບຄຣິສຕະຈັກ" ໃຫ້ສະມາຊິກຂຽນສິ່ງເບື່ອຫລາຍທີ່ສຸດລົງໄປຫາເບື່ອນ້ອຍລົງເປັນລຳດັບ.

9. ເລີ້ມຫ້ອງຮຽນດ້ວຍການຈັບຄູ່ອ້ອນວອນອະທິຖານ. ບອກໃຫ້ສະມາຊິກຕັ້ງໃຈຟັງສິ່ງທີ່ທ່ານຕ້ອງການໃຫ້ພວກເຂົາເຮັດຢ່າງຂ້າງລຸ່ມນີ້:
   ກ. ໃຫ້ນັ່ງກັບນັກຮຽນຄົນອື່ນ
   ຂ. ບອກເຖິງຄຳທີ່ຢາກໃຫ້ຄົນອື່ນຮູ້ເພື່ອພວກເຂົາຈະໄດ້ອ້ອນວອນອະທິຖານ
   ຄ. ໃຫ້ເວລາ 4-5 ນາທີອ້ອນວອນອະທິຖານ
   ງ. ບອກໃຫ້ສະມາຊິກຢຸດອ້ອນວອນອະທິຖານໃນເມື່ອພວກເຂົາໄດ້ຍິນຄຣູເລີ້ມອອກສຽງອະທິຖານ

10. ສຸດທ້າຍຂອງ 5 ນາທີ ໃຫ້ອະທິຖານອ້ອນວອນເພື່ອໃຫ້ພຣະເຈົ້ານຳພາແລະຊົງອວຍພຣະພອນການສຶກສາວັນນີ້.

11. ໃຫ້ເອົາສິ່ງທີ່ສະມາຊິກຂຽນອອກມາເຖິງສິ່ງທີ່ເຮັດໃຫ້ພວກເຂົາເບື່ອກ່ຽວກັບຄຣິສຕະຈັກ. ບອກໃຫ້ສະມາຊິກຈັດເປັນກຸ່ມ ກຸ່ມລະສອງສາມຄົນໃຫ້ສົນທະນາເຖິງເຫດຜົນວ່າເປັນດ້ວຍເຫດໃດພວກເຂົາຈຶ່ງເບື່ອເວລາເວົ້າເຖິງຄຣິສຕະຈັກ?

12. ບອກໃຫ້ແຕ່ລະກຸ່ມລາຍງານວ່າເປັນຫຍັງສິ່ງໜ້າເບື່ອຈຶ່ງເກີດຂຶ້ນ?

13. ບອກວ່າຈຸດປະສົງຂອງບົດຮຽນນີ້ແມ່ນເພື່ອຊ່ວຍໃຫ້ຮູ້ຈັກຄຸນນະວຸດທີອັນດີຂອງຄຣິສຕະຈັກ ແລະບອກວິທີທີ່ຄຣິສຕະຈັກຕ້ອງສະແດງອອກວ່າພວກເຮົາຜູ້ທີ່ເຊື່ອເປັນຮ່າງກາຍຂອງອົງພຣະຄຣິດ.

*ບວ*

# ຄຳແນະນຳສຳລັບຄຣູສອນ
# ບົດຮຽນທີ 6
# <u>ຈົ່ງດຳລົງຊີວິດໃນທາງຂອງອົງພຣະຄຣິດ</u>

---

**<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u>** ເອເຟໂຊ 4:17-5:20

**<u>ພູມຫລັງຂອງພຣະຄັມພີ:</u>** ເອເຟໂຊ 4:17-5:20

**<u>ຈຸດສຳຄັນຂອງບົດຮຽນນີ້:</u>** ຊີວິດຂອງຜູ້ເປັນສະມາຊິກໃນອົງພຣະຄຣິດຕ້ອງດຳລົງຊີວິດໃນທາງຂອງອົງພຣະເຢຊູ.

**<u>ຄຳຖາມເພື່ອການຄົ້ນຄວ້າ:</u>** ການປະພຶດປະຈຳວັນຂອງທ່ານໄດ້ເປັນແສງສະທ້ອນຂອງອົງພຣະເຢຊູຢ່າງໃດ?

**<u>ຈຸດປະສົງຂອງບົດຮຽນ</u>**: ເພື່ອອະທິບາຍເຖິງຄຳສອນເຣື່ອງຊີວິດປະຈຳວັນໃນບົດນີ້ ແລະເພື່ອຈະເອົາມາປະກອບໃຊ້ໃນຊີວິດທີ່ຕົນເອງໃນບ່ອນຕົນເອງບໍ່ສາມາດເຮັດໄດ້.

## ບົດນຳ

ການທີ່ຈະເອົາຄຳສອນໃນບົດຮຽນມາປະກອບໃຊ້ໃນຊີວິດນັ້ນເຕັມໄປໃນຕອນນີ້. ເໝືອນກັບບົດຮຽນທີ 4, ສາມບົດທຳອິດແມ່ນຄຳສອນຂອງອາຈານໂປໂລໃຫ້ຄຣິສຕະຈັກຕອບສນອງຕໍ່ຄຳເອີ້ນຈາກພຣະເຈົ້າໂດຍຄວາມຮັກຈາກອົງພຣະຄຣິດ. ເມື່ອໄດ້ຮຽນຮູ້ແລ້ວວ່າພຣະເຈົ້າໄດ້ສະແດງຄວາມຮັກອັນຍິ່ງໃຫຍ່ຕໍ່ຄຣິສຕະຈັກໂດຍປະທານພຣະບຸດຂອງພຣະອົງມາເປັນຂອງຂວັນຊຶ່ງບໍ່ມີອັນໃດທຽບໄດ້ ອາຈານໂປໂລໄດ້ຂຽນເຖິງລັກສະນະຂອງຄຣິສຕະຈັກທີ່ສັດຊື່ເປັນລຳດັບໄປ.

ບໍ່ມີບ່ອນໃດສອນເຖິງການດຳລົງຊີວິດປະຈຳວັນເໝືອນຂໍ້ສັ້ນໆໃນບົດນີ້. ອາຈານໂປໂລເວົ້າຊ້ຳຄວາມເກົ່າບອກໃຫ້ຜູ້ເຊື່ອໃຫ້ເຂົ້າໃຈເຖິງຄວາມສຳຄັນໃນການດຳລົງຊີວິດປະຈຳວັນ ໃນຄວາມຮັກອັນໃຫຍ່ຈາກພຣະເຈົ້າ. ທັມມະດາແລ້ວຈົດໝາຍຂອງອາຈານໂປໂລໄດ້ຕອບສນອງຕໍ່ຊີວິດປະຈຳວັນຂອງຄົນເຮົາ. ບາງຄັ້ງອາດມີຄົນມາລາຍງານເຖິງຊີວິດຂອງສະມາຊິກໃນຄຣິສຕະຈັກໃນເມືອງເອເຟໂຊໃຫ້ອາຈານໂປໂລຮູ້ວ່າພວກເຂົາຍັງມີບັນຫາບໍ່ຮູ້ຈັກຈະເຮັດຫຍັງໃນຊີວິດໃໝ່. ແຕ່ບາງຄັ້ງອາຈານໂປໂລອາດຮູ້ຈັກສະມາຊິກໃນຄຣິສຕຈັກດີຜ່ານການລາຍງານຂອງຕີໂມທຽວ (ເບິ່ງ ຕມທ 1:3-4 ) ຫລືອາດແມ່ນຄຳລາຍງານຈາກໄທກິກາດ ຜູ້ໄດ້ມາຢາມຄຣິສຕະຈັກນີ້ມາກ່ອນ (ເບິ່ງ ອຟຊ 6:21-22). ເຖິງແມ່ນອາຈານໂປໂລຈະຮູ້ເຖິງບັນຫາຂອງສະມາຊິກໃນຄຣິສຕະຈັກນີ້ຢ່າງໃດນັ້ນບໍ່ສຳຄັນ ແຕ່ສິ່ງສຳຄັນນັ້ນແມ່ນເພິ່ນໄດ້ສັ່ງພວກເຂົາໃຫ້ດຳລັງຊີວິດດີເພື່ອໃຫ້ເປັນພະຍານຕໍ່ຄົນອື່ນໆ.

ບົດຮຽນຕອນນີ້ແມ່ນເວົ້າເຖິງການປ່ຽນແປງ ຄືທຸກຄົນຖືກເອີ້ນໃຫ້ປ່ຽນການກະທຳ ຈາກການເຮັດເໝືອນຊາວໂລກໃຫ້ມີຊີວິດຢ່າງອົງພຣະຄຣິດ. ໃນເມື່ອຈົດໝາຍນີ້ໄປເຖິງຄຣິສຕະຈັກ ຜູ້ທີ່ເຊື່ອຈຳເປັນຕ້ອງກວດເບິ່ງການປະພຶດຂອງຕົນເອງໃຫ້ດີ. ຄຣິສະຕຽນໃນທຸກວັນນີ້ກໍຈຳເປັນຕ້ອງປ່ຽນການປະພຶດທີ່ບໍ່ເປັນທີ່ຖວາຍພຣະກຽດແດ່ພຣະເຈົ້າຄືກັນ.

## ແນະນຳການສອນ

### ແຜນການສອນ-ວິທີສອນນັ້ນອາດສາມາດໃຊ້ແຕກຕ່າງກັນ

14. ໃຫ້ຂຽນຄຳເວົ້າວ່າ "ຈົ່ງເຮັດ ແລະຢ່າເຮັດ" ໃສ່ເຈັ້ຽ ຕັດຄຳເວົ້ານັ້ນອອກຈາກກັນແລະເອົາໄປຢອງໃສ່ຕັ່ງນັ່ງແຕ່ລະໜ່ວຍ.

15. ເລີ້ມຫ້ອງຮຽນດ້ວຍການອ້ອນວອນອະທິຖານ. ບອກໃຫ້ຈັດເປັນກຸ່ມ ແຕ່ລະກຸ່ມບໍ່ໃຫ້ເກີນສາມຄົນ. ບອກໃຫ້ແຕ່ລະກຸ່ມຟັງຄຳແນະນຳກ່ອນພວກເຂົາຈະໄດ້ລົງມືເຮັດອັນໃດ?

    ກ. ແບ່ງປັນ ຈຸດປະສົງຈຳເພາະໃຫ້ທຸກຄົນໄດ້ຍິນ
    ຂ. ອ້ອນວອນອະທິຖານເພື່ອຈຸດປະສົງທີ່ຄົນສເນີອອກມາ
    ຄ. ໃຫ້ໃຊ້ເວລາປະມານ 7 ນາທີໃນການອ້ອນວອນອະທິຖານ

16. ໃນ 7 ນາທີສຸດທ້າຍຜູ້ເປັນຄຣູສອນອ້ອນວອນອະທິຖານຂໍການຊົງນຳຈາກພຣະເຈົ້າໃນການສຶກສາ

17. ສົນທະນາກັນເຖິງການເຮັດຕາມລາຍການເປັນລຳດັບ ບອກວ່າໃນຊີວິດພວກເຮົາກໍມັກໃຊ້ສິ່ງທີ່ຂຽນອອກໄປລຳດັບ. ບອກໃຫ້ສະມາຊິກຂຽນເປັນລາຍການຕາມລຳດັບຈາກຕັ່ງທີ່ພວກເຂົານັ່ງທຳອິດວ່າແມ່ນ "ຈົ່ງເຮັດ ຫລືຢ່າເຮັດ"

18. ກ່າວວ່າບົດຮຽນນີ້ພວກເຮົາຈະໄດ້ສຶກສາເຖິງການຂຽນອອກມາເປັນລຳດັບຈາກພຣະຄັມພີ.

19. ບອກໃຫ້ຈັບເປັນກຸ່ມ ກຸ່ມນຶ່ງສອງສາມຄົນ. ບອກໃຫ້ກຸ່ມນຶ່ງອ່ານ ອຟຊ 4:17-32; ກຸ່ມສອງໃຫ້ອ່ານ ອຟຊ 5:1-7; ກຸ່ມສາມໃຫ້ອ່ານ ອຟຊ 5:8-14; ກຸ່ມສີ່ໃຫ້ອ່ານ ອຟຊ 5:15-20.

20. ບອກໃຫ້ແຕ່ລະກຸ່ມຂຽນອອກຈາກຂໍ້ພຣະຄັມພີທີ່ພວກເຂົາກຳລັງສຶກສາເຖິງສິ່ງ "ຈົ່ງເຮັດ ແລະ ຢ່າເຮັດ" ແລ້ວໃຫ້ຂຽນສິ່ງທີ່ກຸ່ມຕົນເອງເຫັນໃສ່ກະດານເພື່ອໃຫ້ຄົນອື່ນຈະໄດ້ຮູ້ນຳ.

21. ບອກໃຫ້ແຕ່ລະກຸ່ມເລືອກເອົາຜູ້ນຳເພື່ອລາຍງານຜົນງານ.

22. ຖາມວ່າການໃຊ້ລາຍການຊຽນອອກມາເປັນລຳດັບນັ້ນມີຜົນປະໂຍດອັນໃດແດ່?

23. ຮ້ອງຂໍໃຫ້ມີຜູ້ສມັກອ້ອນວອນອະທິຖານເປີດ.

*ບວ*

# ຄຳແນະນຳສຳລັບຄຣູສອນ
# ບົດຮຽນທີ 7
# <u>ຊີວິດໃນຄອບຄົວຄຣິສຕຽນ</u>

---

**<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້</u>**: ເອເຟໂຊ 5:21-6:9

**<u>ພູມຫລັງຂອງພຣະຄັມພີ</u>**: ເອເຟໂຊ 5:21-6:9

**<u>ຈຸດສຳຄັນສຳລັບບົດຮຽນນີ້:</u>** ຄວາມຢຳເກງພຣະຄຣິດເປັນຫລັກຂອງຄວາມສຳພັນທຸກຢ່າງໃນຄອບຄົວ.

**<u>ຄຳຖາມເພື່ອຄົ້ນຄວ້າ</u>**: ຄວາມເຊື່ອຄຣິສຕຽນມີຄວາມສຳຄັນວິທີໃດໃນຄອບຄົວ ແລະທີ່ທຳງານ?

**<u>ຈຸດປະສົງຂອງການສຶກສານີ້:</u>** ເພື່ອເບິ່ງຄວາມແຕກຕ່າງທີ່ຈະເກີດຂຶ້ນເວລາຂ້ອຍຍອມໃຫ້ຄວາມຢຳເກງພຣະຄຣິດເປັນຫລັກຂອງຄວາມສັມພັນໃນຄອບຄົວແລະໃນທີ່ທຳງານ.

## <u>ແຜນສຳລັບການສອນ</u>

### <u>ນຳເຣື່ອງເຂົ້າສູ່ຊີວິດຈິງ (ໃຊ້ເວລາ 5 ນາທີ)</u>

1. ກ່ອນການຮຽນບົດຮຽນນີ້ໃຫ້ຕຽມຂໍ້ຄວາມຕໍ່ໄປນີ້ໃສ່ເຈັ້ຽໃບນຶ່ງໄວ້ ເພື່ອຈະໄດ້ຢາຍໃຫ້ນັກຮຽນ:

(ເຈັ້ຽເພື່ອແຈກຢາຍ)

**ຊີວິດໃນຄອບຄົວຄຣິສຕຽນ**

**ເອເຟໂຊ 5:21—6:9**

ຄວາມສຳພັນໃນຄອບຄົວຄຣິສຕຽນຈະຕ້ອງຢູ່ໃນຣະບຽບໂດຍຄວາມຢຳເກງພຣະຄຣິດ

I. ຫລັກນຳ (ອຟຊ 5:21)

II. ສາມີແລະພັຣຍາ (ອຟຊ 5:22-23)
- A. ຄວາມຮັບຜິດຊອບຂອງ__________(22-24)
- B. ຄວາມຮັບຜິດຊອບຂອງ__________(25-33)

III. ລູກແລະພໍ່ແມ່ (ອຟຊ 6:1-4)
- A. ຄວາມຮັບຜິດຊອບຂອງ________(1-3)
- B. ຄວາມຮັບຜິດຊອບຂອງ________(4)

IV. ຂ້ອຍຂ້າ ແລະນາຍ (ອຟຊ 6:5-9)

A. ຄວາມຮັບຜິດຊອບຂອງ________(6-8)

B. ຄວາມຮັບຜິດຊອບຂອງ________(9)

---

**ຄຳຕອບສຳລັບຊ່ອງວ່າງ** (ເພື່ອຄຣູ)

**ຊີວິດໃນຄອບຄົວຄຣິສຕຽນ**

**ເອເຟໂຊ 5:21—6:9**

ຄວາມສຳພັນໃນຄອບຄົວຄຣິສຕຽນຈະຕ້ອງຢູ່ໃນຣະບຽບໂດຍຄວາມຢຳເກງພຣະຄຣິດ

I. ຫລັກນຳ (ອຟຊ 5:21)

II. ສາມີແລະພັຣຍາ (ອຟຊ 5:22-23)

  C. ຄວາມຮັບຜິດຊອບຂອງ พັຣຍາ (22-24)

  D. ຄວາມຮັບຜິດຊອບຂອງ ສາມີ (25-33)

III. ລູກແລະພໍ່ແມ່ (ອຟຊ 6:1-4)

  C. ຄວາມຮັບຜິດຊອບຂອງ ພວກລູກ (1-3)

  D. ຄວາມຮັບຜິດຊອບຂອງ ພວກພໍ່ (4)

IV. ຂ້ອຍຂ້າ ແລະນາຍ (ອຟຊ 6:5-9)

  C. ຄວາມຮັບຜິດຊອບຂອງ ຂ້ອຍຂ້າ (6-8)

  D. ຄວາມຮັບຜິດຊອບຂອງ ພວກນາຍ (9)

---

2. ເລີ້ມບົດຮຽນໂດຍຂໍໃຫ້ນັກຮຽນເລົ່າເຖິງຄວາມສຳເຣັດໃນການເຮັດພາກການນຳພຣະທັມໄປໃຊ້ໃນຊີວິດດ້ວຍຄວາມສັດຊື່ໃນບົດຮຽນທີ 6 ທີ່ຜ່ານມາ.ເບິ່ງບົດຮຽນຄືນຖ້າຈຳເປັນ; ແລ້ວຂອບຄຸນພຣະເຈົ້າສຳລັບນັກຮຽນ ແລະຜູ້ທີ່ກຳລັງເຮັດບົດຮຽນນັ້ນໃຫ້ສຳເຣັດ.
3. ຂໍໃຫ້ທຸກຄົນຫຼັບຕາ; ບອກໃຫ້ເຂົາເຈົ້າຄິດເຖິງຊີວິດຂອງຕົນເອງ, ໂດຍສະເພາະຊີວິດໃນຄອບຄົວແລະທີ່ທຳງານ; ໃຫ້ເຂົາເຈົ້າຄິດເຖິງສ່ວນທີ່ດີ, ສ່ວນທີ່ບໍ່ດີ, ແລະສ່ວນທີ່ສົກປົກໃນຊີວິດ. ໃນຂະນະທີ່ຍັງຫຼັບຕາຢູ່ໃຫ້ຖາມວ່າ: ທ່ານຕ້ອງການຮັກສາສ່ວນທີ່ດີ ແລະປ່ຽນແປງສ່ວນທີ່ສົກປົກບໍ່? ແນະນຳວ່າໃນບົດຮຽນນີ້ພວກເຂົາເຈົ້າຈະໄດ້ເຫັນວ່າການດຳເນີນຊີວິດໃນພຣະເຍຊູສາມາດມີຜົນກະທົບໃສ່ຄວາມສຳພັນໃນຄອບຄົວແລະໃນທີ່ທຳງານ. ບອກໃຫ້ເຂົາເຈົ້າມືນຕາ; ໃຫ້ເວລາສາມເຖິງຫ້ານາທີສຳລັບຂໍ້ນີ້.

## <u>ນຳພາການສຶກສາພຣະທັມ (ໃຊ້ເວລາ 30 ນາທີ)</u>

4. ເບິ່ງບົດຮຽນເພື່ອຊ່ວຍຄວາມເຂົ້າໃຈ, ການອະທິບາຍ, ແລະອື່ນໆໃນການສອນມື້ນີ້.
5. ພານັກຮຽນເບິ່ງຫລັກນຳໃນພາກນຶ່ງ. ອ່ານ ເອເຟໂຊ 5:21; ອະທິບາຍຄຳວ່າ “ຍອມຢູ່ໃຕ້ບັງຄັບ.”ບອກວ່າພຣະຄຳຂໍ້ນີ້ເປັນຫລັກນຳໃນບົດຮຽນທັງໝົດມື້ນີ້; ໃຫ້ນັກຮຽນອອກຄຳເຫັນກ່ຽວກັບ “ເນື່ອງດ້ວຍເຈົ້າມີຄວາມຢຳເກງພຣະເຈົ້າ.”
6. ບອກນັກຮຽນໃຫ້ຂຽນ <u>ພັຣຍາ</u> ໃສ່ບ່ອນວ່າງກ້ອງ “ສາມີແລະພັຣຍາ” ໃນເຈັ້ຽທີ່ໄດ້ຢາຍໃຫ້. ອ່ານ ເອເຟໂຊ 5:22-24. ອະທິບາຍ. ບອກນັກຮຽນໃຫ້ຂຽນ <u>ສາມີ</u> ໃສ່ບ່ອນຫວ່າງທີສອງ. ອ່ານ ເອເຟໂຊ 5:25-33, ແລ້ວອະທິບາຍ. ພານັກຮຽນເບິ່ງ ໂກໂລຊາຍ 3:18-19.
7. ຖາມນັກຮຽນ: ວັທນະທັມໃນປັດຈຸບັນທ້າທາຍໜ້າທີ່ຂອງສາມີແລະພັຣຍາວິທີໃດແດ່? ສຳລັບຜູ້ທີ່ແຕ່ງງານ ຫລືຜູ້ເຄີຍແຕ່ງງານ, ຖ້າທ່ານສາມາດປ່ຽນໜ້າທີ່ໄດ້, ທ່ານຈະເຮັດຫຍັງແດ່ທີ່ແຕກຕ່າງ?
8. ອ່ານ ເອເຟໂຊ 6:1-4. ບອກນັກຮຽນໃຫ້ຂຽນ <u>ລູກ</u> ໃສ່ບ່ອນຫວ່າງທຳອິດໃນພາກ “ລູກແລະພໍ່ແມ່.” ອະທິບາຍໜ້າທີ່ຂອງລູກຢູ່ໃນຄອບຄົວ; ເບິ່ງ ໂກໂລຊາຍ 3:20. ຖາມນັກຮຽນ: ສັງຄົມມີຜົນກະທົບວິທີໃດເຣື່ອງຄວາມສາມາດຂອງລູກທີ່ຈະເຊື່ອຟັງຄຳສອນໃນພຣະທັມ? ຄຣິສຕະຈັກສາມາດຊ່ວຍວິທີໃດ? ພໍ່ແມ່ສາມາດຊ່ວຍວິທີໃດ?
9. ບອກນັກຮຽນໃຫ້ຂຽນ <u>ພໍ່</u>ໃສ່ບ່ອນວ່າງທີສອງໃນພາກນີ້. ອະທິບາຍໜ້າທີ່ຂອງພໍ່ໃນຊີວິດຄອບຄົວ. ເບິ່ງ ໂກໂລຊາຍ 3:21. ຖາມ: ວັທນະທັມໃນສມັຍນີ້ຊ່ວຍ ຫລືກີດກັ້ນພໍ່ໃນການເຊື່ອຟັງຄຳສອນນີ້. ພໍ່ຈະຕ້ອງປ່ຽນແປງຫຍັງແດ່?
10. ອ່ານ ເອເຟໂຊ 6: 5-9. ບອກນັກຮຽນໃຫ້ຂຽນ <u>ຂ້ອຍຂ້າ</u> ໃສ່ບ່ອນວ່າງໃນຫົວຂໍ້ “ຂ້ອຍຂ້າແລະນາຍ.” ແລ້ວຂຽນ <u>ນາຍ</u> ໃສ່ບ່ອນວ່າງທີສອງ. ອະທິບາຍໜ້າທີ່ຂອງຂ້ອຍຂ້າ ແລະໜ້າທີ່ຂອງນາຍ ອີງຕາມພຣະທັມນີ້. ອ່ານ ໂກໂລຊາຍ 3:22—4:1 ເພື່ອຊ່ວຍ. ຖາມ: ທ່ານຄິດວ່າຄຳສອນຂອງໂປໂລໃນຕອນນີ້ ມີຄວາມໝາຍແນວໃດສຳລັບທີ່ທຳງານຂອງທ່ານໃນປັດຈຸບັນ? ຄຳສອນປະເພດນີ້ຈະມີຜົນສະທ້ອນແນວໃດສຳລັບບ່ອນທຳງານຂອງທ່ານເອງ? ເປັນຫຍັງ?

## <u>ນຳພຣະທັມໄປໃຊ້ໃນຊີວິດ (ໃຊ້ເວລາ 15 ນາທີ)</u>

11. ພານັກຮຽນສົນທະນາຄຳຖາມຕໍ່ໄປນີ້: ຖ້າທ່ານເຮັດຕາມຄຳສອນຂອງໂປໂລໃນບົດຮຽນມື້ນີ້, ມີຫຍັງແດ່ທີ່ຈະປ່ຽນແປງກ່ຽວກັບຄວາມສຳພັນໃນຄອບຄົວແລະໃນທີ່ທຳງານຂອງທ່ານ?
12. ປິດການສຶກສາພຣະຄຳດ້ວຍການອ້ອນວອນອະທິຖານ.

*ສຄ*

# ຄຳແນະນຳສຳລັບຄຣູສອນ
# ບົດຮຽນທີ 8
# <u>ແບບຢ່າງເພື່ອເຮັດຕາມ</u>

---

**<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້</u>**: 1 ຕີໂມທຽວ 1:1-5, 12-19

**<u>ພູມຫລັງຂອງພຣະຄັມພີ</u>**: 1 ຕີໂມທຽວ 1

**<u>ຈຸດສຳຄັນສຳລັບບົດຮຽນນີ້:</u>** ໂປໂລປະສົບການເຣື່ອງພຣະຄຸນ ແລະຄວາມເມດຕາໄດ້ຫລໍ່ຫລອມຊີວິດ, ການຮັບໃຊ້, ແລະຄຳສອນຂອງລາວ; ສິ່ງນັ້ນໆໄດ້ເປັນແບບຢ່າງເຣື່ອງການນຳພາແລະການຮັບໃຊ້ສຳລັບຕີໂມທຽວ.

**<u>ຄຳຖາມເພື່ອຄົ້ນຄວ້າ</u>**: ຜູ້ໃດເປັນແບບຢ່າງທີ່ດີເຣື່ອງການນຳພາແລະການຮັບໃຊ້ສຳລັບທ່ານ? ທ່ານກຳລັງເປັນແບບຢ່າງໃຫ້ຄົນອື່ນແນວໃດ?

**<u>ຈຸດປະສົງຂອງການສຶກສານີ້:</u>** ເພື່ອເບິ່ງຄຸນລັກສະນະທີ່ໂປໂລໄດ້ເປັນແບບຢ່າງໃຫ້ຕີໂມທຽວເຣື່ອງການນຳພາແລະການຮັບໃຊ້ທີ່ຄວນຕິດຕາມ.

## <u>ແຜນສຳລັບການສອນ</u>

### <u>ນຳເຣື່ອງເຂົ້າສູ່ຊີວິດຈິງ (ໃຊ້ເວລາ 5 ນາທີ)</u>

1. ແນະນຳບົດຮຽນນີ້, “1 ແລະ 2 ຕີໂມທຽວ:  ນຳພາຄຣິສຕະຈັກ,”  ໂດຍກວດເບິ່ງສິ່ງເຫລົ່ານີ້ຊຶ່ງປຶ້ມພວກນີ້ມີຄືກັນກັບພຣະທັມເອເຟໂຊທີ່ໄດ້ຮຽນມາ.
    - ທັງສາມປຶ້ມແມ່ນໂປໂລເປັນຜູ້ຂຽນ.
    - ປຶ້ມທັງສາມກ່ຽວຂ້ອງກັບເມືອງເອເຟໂຊ: ປຶ້ມເອເຟໂຊຖືກສົ່ງໄປເມືອງເອເຟໂຊ, ແລະຕີໂມທຽວກໍເປັນສິດຍາບິບານທີ່ຄຣິສຕະຈັກນີ້ (1 ຕມທ 1:3-4).
    - ປຶ້ມທັງສາມ ເວົ້າເຣື່ອງຄຣິສຕະຈັກ ແລະຜູ້ນຳ.
2. ເຊີນໃຫ້ຜູ້ໃດຜູ້ນຶ່ງແບ່ງປັນປະສົບການກ່ຽວກັບຜູ້ນຳຄຣິສຕຽນທີ່ດີ. ອ່ານ “ຈຸດປະສົງຂອງການສຶກສານີ້”

### <u>ນຳພາການສຶກສາພຣະທັມ (ໃຊ້ເວລາ 30 ນາທີ)</u>

3. ຂຽນຄຳວ່າ “ຄວາມ” ໃສ່ກະດານສີເທື່ອແຕ່ເທິງລົງລຸ່ມ ເພື່ອໃຊ້ເປັນໂຄງຮ່າງ:

    ຄວາມ--ໝັ້ນໃຈ (1 ຕມທ 1:1-2)

    ຄວາມ--ກ້າຫານ (1 ຕມທ 1:3-4,18,19)

    ຄວາມ--ຮັກ (1 ຕມທ 1:5)

    ຄວາມ--ເຊື່ອໃຈ (1 ຕມທ 1:12-17)

4. ໃຫ້ຜູ້ນຶ່ງອ່ານ 1 ຕີໂມທຽວ 1:1-2 ໃນຂະນະທີ່ທ່ານຂຽນ "ໝັ້ນໃຈ" ໃສ່ຕໍ່ຈາກ "ຄວາມ" ໂຕທໍາອິດໃນກະດານ. ພານັກຮຽນເບິ່ງຂໍ້ພຣະຄໍາທີ່ເຮັດໃຫ້ໂປໂລໝັ້ນໃຈໃນການຊີງເອີ້ນ. ເບິ່ງຫົວຂໍ້ "ໂປໂລໝັ້ນໃຈໃນການຊີງເອີ້ນ (1 ຕມທ 1:1-2)." ໃຫ້ຜູ້ນຶ່ງອ່ານເຣື່ອງການກັບໃຈຂອງໂປໂລໃນ ກິຈການ 9: 1-16.
5. ໃຫ້ຜູ້ນຶ່ງອ່ານ 1ຕີໂມທຽວ 1:3-4 ໃນຂະນະທີ່ທ່ານຂຽນ "ກ້າຫານ" ໃສ່ຕໍ່ຈາກ "ຄວາມ" ໂຕທີສອງໃນກະດານ. ພານັກຮຽນເບິ່ງການຕໍ່ສູ້ທີ່ຈະເກີດຂຶ້ນກັບຕີໂມທຽວ. ເບິ່ງຫົວຂໍ້ "ໂປໂລມີຄວາມກ້າຫານເພື່ອພົບການຕໍ່ຕ້ານ (1 ຕມທ 1:3-4, 18-19).
6. ຂຽນ "ຮັກ" ໃສ່ຕໍ່ຈາກ "ຄວາມ" ໂຕທີສາມໃນກະດານໃນຂະນະທີ່ຜູ້ນຶ່ງອ່ານ 1 ຕມທ 1:5. ຊັກຊວນໃຫ້ນັກຮຽນຊອກຫາສາມຢ່າງທີ່ຈະຊ່ວຍໃຫ້ພວກເຮົາຮັກຄົນທີ່ຕໍ່ສູ້ພວກເຮົາ. ເບິ່ງຫົວຂໍ້ "ໂປໂລຮັກຈິງໃຈກ່ຽວກັບຄໍາສອນຂອງທ່ານ (1 ຕມທ 1:5)". ພານັກຮຽນຕອບຄໍາຖາມ 1 ແລະ 2 ໃນພາກສຸດທ້າຍຂອງບົດຮຽນນີ້.
7. ຂຽນ "ເຊື່ອໃຈ" ໃສ່ຕໍ່ຈາກ "ຄວາມ" ໂຕທີສີ່ໃນຂະນະທີ່ຜູ້ນຶ່ງອ່ານ 1 ຕີໂມທຽວ 1:12-17. ຖາມ: ໂປໂລເອົາຊະນະເບື້ອງຫລັງຂອງຕົນແລະໄດ້ກາຍເປັນຜູ້ນໍາທີ່ເກີດຜົນໄດ້ວິທີໃດ? ເບິ່ງ ກິຈການ 7: 54—8:3ເພື່ອຫາຂໍ້ມູນເພີ້ມກ່ຽວກັບຊີວິດໂປໂລກ່ອນການກັບໃຈ. ອະທິບາຍຄໍາສະດຸດີໃນ 1 ຕມທ 1: 17 ຊຶ່ງມາຈາກໃຈຂອງຜູ້ທີ່ໄດ້ຮັບການອະພັຍຢ່າງມາກມາຍ.

## <u>ນໍາພຣະທັມໄປໃຊ້ໃນຊີວິດ (ໃຊ້ເວລາ 15 ນາທີ)</u>

8. ພານັກຮຽນຕອບຄໍາຖາມ 3 ແລະ 4 ໃນພາກສຸດທ້າຍຂອງບົດຮຽນນີ້.
9. ປິດການສຶສາພຣະທັມດ້ວຍຄໍາຖາມນີ້: <u>ຖ້າໂປໂລບໍ່ຍອມໃຫ້ພຣະຄຸນຂອງພຣະເຈົ້າອະພັຍຊີວິດທີ່ຜ່ານມາຂອງທ່ານ, ຄຣິສຕະຈັກຈະສູນເສັຽຫຍັງແດ່</u>?

*ສຄ*

# ຄຳແນະນຳສຳລັບຄຣູສອນ
# ບົດຮຽນທີ 9
# ຄຸນສົມບັດຂອງຜູ້ນຳຄຣິສຕະຈັກ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້**: 1 ຕີໂມທຽວ 3: 1-13

**ພູມຫລັງຂອງພຣະຄັມພີ**: 1 ຕີໂມທຽວ 3: 1-13

**ຈຸດສຳຄັນສຳລັບບົດຮຽນນີ້:** ຜູ້ນຳຄຣິສຕະຈັກຄວນຈະເປັນຜູ້ທີ່ມີຄຸນສົມບັດຝ່າຍຈິດວິນຍານສູງ ແລະ ເປັນຜູ້ທີ່ດູແລຄຣິສຕະຈັກຂອງພຣະເຈົ້າເປັນຢ່າງດີ ພ້ອມດ້ວຍການຮັບໃຊ້ແລະການຕາງໜ້າທີ່ດີ.

**ຄຳຖາມເພື່ອຄົ້ນຄວ້າ**: ເຮົາຄວນຊອກຫາຫຍັງແດ່ໃນຜູ້ນຳຄຣິສຕະຈັກ?

**ຈຸດປະສົງຂອງການສຶກສານີ້:** ເພື່ອເບິ່ງຄຳສອນກ່ຽວກັບຜູ້ນຳຄຣິສຕະຈັກ ແລະເບິ່ງສິ່ງທີ່ພວກຜູ້ນຳໃນຄຣິສຕະຈັກຂອງຂ້ອຍກຳລັງເຮັດຢູ່.

## ແຜນສຳລັບການສອນ

### ນຳເຣື່ອງເຂົ້າສູ່ຊີວິດຈິງ (ໃຊ້ເວລາ 5 ນາທີ)

1. ພານັກຮຽນຊອກຫາຂໍ້ມູນຕ່າງໆກ່ຽວກັບຄຣິສຕະຈັກຂອງທ່ານເພື່ອໃຊ້ເປັນເບື້ອງຫລັງຂອງບົດຮຽນໃນມື້ນີ້. ໃຊ້ຄຳຖາມຕໍ່ໄປນີ້ເພື່ອຊ່ວຍໃຫ້ນັກຮຽນຄິດ:
    - ໂບດພວກເຮົາພົບກັນຢູ່ໃສ: ຕຶກຕົນເອງ, ຕຶກຢືມ, ຫ້ອງເຊົ່າ, ເຮືອນຄົນ, ໂຮງຮຽນຫລວງ, ແລະຕໍ່ໆໄປ.
    - ໂບດພວກເຮົາມີຜູ້ຮັບໃຊ້ທີ່ຖືກສະຖາປະນາແລ້ວຈັກຄົນ ແລະມີພນັກງານຮັບຈ້າງຈັກຄົນ?
    - ມັກຄະນາຍົກ ຫລືຜູ້ບໍລະບັດຖືກເລືອກເອົາ ຫລືວ່າຖືກສະຖາປະນາ?
    - ພວກເຮົາສະຖາປະນາມັກຄະນາຍົກ ຫລືຜູ້ຮັບໃຊ້ຜູ້ຍິງບໍ່?
    - ໃນຄຣິສຕະຈັກແມ່ນໃຜເປັນຜູ້ຕັດສິນໃຈໃນເຣື່ອງຕ່າງໆ: ພນັກງານ, ຜູ້ປົກຄອງ, ມັກຄະນາຍົກ, ກັມມະການ, ສະມາຊິກທົ່ວໄປ?
    - ແມ່ນຫຍັງຄືຈຸດດີຂອງໂບດ: ການປະກາດ, ນະມັສການ, ການຮັບໃຊ້ຄົນຍາກຈົນ, ການ ຕັ້ງໂບດໃໝ່, ຕໍ່ໆໄປ?
    - ແມ່ນຫຍັງທີ່ທ່ານມັກທີ່ສຸດໃນໂບດນີ້?
2. ອ່ານ ຈຸດສຳຄັນສຳລັບບົດຮຽນ ແລະ ຈຸດປະສົງຂອງການສຶກສານີ້ ຈາກບົດຮຽນ.

### ນຳພາການສຶກສາພຣະທັມ (ໃຊ້ເວລາ 30 ນາທີ)

3. ອະທິບາຍຕຳແໜ່ງຜູ້ນຳສອງຢ່າງ: ຜູ້ປົກຄອງ ແລະມັກຄະນາຍົກ ທີ່ສອນຢູ່ໃນ 1 ຕີໂມທຽວ 3:1-13. ເບິ່ງຫົວຂໍ້ໃຫຍ່, “ຜູ້ນຳໃນຄຣິສຕະຈັກຕ້ອງສົມຄວນກັບວຽກ (1 ຕມທ 3:1)” ຂຽນໃສ່ກະດານ:
    - ຜູ້ດູແລ = ຜູ້ປົກຄອງ ແລະສິດຍາພິບານ
    - ມັກຄະນາຍົກ = ຜູ້ນຳຮັບໃຊ້
4. ຂຽນ “ຜູ້ດູແລ” ໃສ່ກະດານ; ກ້ອງລົງມາໃຫ້ແບ່ງກະດານເປັນສອງພາກ; ພາກທີນຶ່ງໃຫ້ຂຽນຫົວຂໍ້ “ຊີວິດຄອບຄົວ,” ແລະພາກທີສອງໃສ່ຫົວຂໍ້ “ຄຸນສົມບັດ.” ພານັກຮຽນເບິ່ງ 1 ຕີໂມທຽວ 3:1-7 ແລະຊອກຫາຄຸນສົມບັດທີ່ກ່າວໄວ້.
    - ກ້ອງ “ຊີວິດຄອບຄົວ” ໃຫ້ຂຽນສິ່ງທີ່ຄົ້ນພົບໃສ່ (ສັດຊື່ຕໍ່ພັຣຍາ, ຄອບຄອງບ້ານເຮືອນໄດ້ດີ, ລູກເຊື່ອຟັງແລະນັບຖື)
    - ກ້ອງ “ຄຸນສົມບັດ” ໃຫ້ເຮັດຄືກັບທີ່ຜ່ານມາ (ຄົນພາຍນອກແລະໃນຄຣິສຕະຈັກນັບຖື, ຮູ້ຈັກບັງຄັບຕົນເອງ, ຮັບແຂກດີ, ສຸພາບ, ຮູ້ພຣະຄຳພີ, ເພື່ອແຜ່, ເຕີບໃຫຍ່ຝ່າຍຈິດວິນຍານ)
5. ຫາບ່ອນຂຽນໃນກະດານ ແລ້ວຂຽນຫົວຂໍ້ “ມັກຄະນາຍົກ.” ກ້ອງລົງມາໃຫ້ແບ່ງກະດານເປັນສອງພາກ; ພາກທີ່ນຶ່ງໃຫ້ຂຽນຫົວຂໍ້ “ຊີວິດຄອບຄົວ,” ແລະພາກທີສອງໃສ່ຫົວຂໍ້ “ຄຸນສົມບັດ.” ເບິ່ງ 1 ຕີໂມທຽວ 3:8-12.
    - ພານັກຮຽນຄົ້ນຄວ້າຫາ “ຄຸນສົມບັດ” ແລ້ວຂຽນລົງ (ນັບຖື, ຈິງໃຈ: ສຸພາບ, ສັດຊື່, ເຊື່ອ ແລະດຳເນີນຊີວິດໃນພຣະຄຳ)
    - ຄົ້ນຄວ້າເບິ່ງ “ຊີວິດຄອບຄົວ” ແລ້ວຂຽນໄວ້ (ພັຣຍາຜູ້ນັບຖື, ອ່ອນຫວານ, ໄວ້ໃຈໄດ້, ສັດຊື່ຕໍ່ພັຣຍາ, ຄອບຄອງລູກແລະເງິນໄດ້ດີ)
6. ອະທິບາຍ 1 ຕີໂມທຽວ 3:13 ໂດຍເນັ້ນວ່າຜູ້ນຳຄຣິສຕະຈັກທີ່ຮັບໃຊ້ໄດ້ດີຈະເຕີບໃຫຍ່ຝ່າຍວິນຍານ ແລະລາວສົມຄວນໄດ້ຮັບຄວາມນັບຖື ແລະຄຳຂອບໃຈ.

## <u>ນຳພຣະທັມໄປໃຊ້ໃນຊີວິດ (ໃຊ້ເວລາ 15 ນາທີ)</u>

7. ໃຊ້ຄຳຖາມບາງຂໍ້ໃນພາກສຸດທ້າຍຂອງບົດຮຽນເພື່ອສົນທະນາ; ທ່ານອາດຈະໃຊ້ຄຳຖາມຕໍ່ໄປນີ້ເພີ້ມອີກ.
    - ຄຣິສຕະຈັກຂອງພວກເຮົາໄດ້ເພີ້ມຫຍັງແດ່ສຳລັບຜູ້ດູແລ ແລະມັກຄະນາຍົກ? ສິ່ງທີ່ພວກເຮົາເພີ້ມນັ້ນຖືກກັບສິ່ງທີ່ໄດ້ກ່າວໄວ້ໃນບົດຮຽນນີ້ບໍ່?
    - ສິ່ງທີ່ພວກເຮົາໄດ້ເພີ້ມເຕີມນັ້ນເປັນສິ່ງທີ່ຄົນອື່ນຕ້ອງເອົາແບບຢ່າງບໍ່?
8. ຊັກຊວນນັກຮຽນໃຫ້ເປັນຜູ້ຮ່ວມອ້ອນວອນກັບຜູ້ດູແລ ແລະມັກຄະນາຍົກໃນຄຣິສຕະຈັກຂອງພວກເຮົາໃນຂະນະທີ່ພວກເຮົາກຳລັງສຶກສາພຣະທັມ 1 ແລະ 2 ຕີໂມທຽວ.

*ສຄ*

## ຄຳແນະນຳສຳລັບຄຣູສອນ
## ບົດຮຽນທີ 10
## <u>ຝຶກຕົນເອງໃຫ້ເປັນຄົນເຄັ່ງສິນທັມ</u>

---

**<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u>** 1 ຕີໂມທຽວ 4

**<u>ພູມຫລັງຂອງພຣະຄັມພີ:</u>** 1 ຕີໂມທຽວ 4

**<u>ຈຸດສຳຄັນຂອງບົດຮຽນນີ້:</u>** ໂປໂລບອກໃຫ້ຕີໂມທຽວຝຶກຕົນເອງໃຫ້ກາຍເປັນຄົນເຄັ່ງສິນທັມ ເພື່ອຈະສາມາດຕໍ່ສູ້ກັບວິນຍານຊົ່ວ

**<u>ຄຳຖາມເພື່ອການຄົ້ນຄວ້າ:</u>** ທ່ານມີວິທີທາງຫຍັງທີ່ຕ້ອງຝຶກຕົນເອງໃຫ້ເປັນຄົນເຄັ່ງໃນສິນທັມ

**<u>ຈຸດປະສົງຂອງບົດຮຽນ</u>:** ເພື່ອຊ່ອຍທ່ານໃຊ້ຊອກຫາວິທີທາງຝຶກຕົນເອງ

## <u>ບົດນຳ</u>

ບົດຮຽນນີ້ແມ່ນທ່ານອາຈານໂປໂລສອນຕີໂມທຽວວິທີປ້ອງກັນບໍ່ໃຫ້ຫລົງເຊື່ອພວກຄຣູສອນປອມ ເພາະວ່າເວລານັ້ນພວກຜູ້ສອນປອມໄດ້ສອນປິ້ນໄປຈາກພຣະຄັມພີມີຫລວງຫລາຍ, ໂປໂລສອນວ່າວິທີທີ່ດີທີ່ສຸດແມ່ນການຝຶກຫັດອ່ານໜັງສື (ແປວ່າອ່ານພຣະຄັມພີ) ປະກອບດ້ວຍການປະຕິບັດຕາມ ແລະສອນຄົນອື່ນຕາມນັ້ນ.

### <u>ອິດທິພົນຕໍ່ການຝຶກຫັດ</u> ( 4:1-6).

1. ຫາກຄຣູມີເຄື່ອງພໍເອົາມາຫ້ອງຮຽນໄດ້ຈິ່ງນຳມາ, ຫລືນຳເອົາຮູບເຄື່ອງຫັດການ Exercise ມາຕິດຕາມຝາຫ້ອງຮຽນ. ເມື່ອໄຫວ້ວອນເປີດແລ້ວເລີ້ມຕົ້ນດ້ວຍຖາມນັກຮຽນວ່າ "ຢູ່ບ້ານຂອງທ່ານມີເຄື່ອງ Exercise ບໍ່? ມີຫຍັງແດ່?" ໃຫ້ເວລານັກຮຽນຕອບ ຫາກຜູ້ໃດຕອບວ່າມີແລະໄດ້ Exercise ເປັນປະຈຳ, ເຊີນຜູ້ນັ້ນເປັນພະຍານການ Exercise ມີຜົນປໂຍດຕໍ່ຮ່າງກາຍແນວໃດ?

2. ເອົາພຣະຄັມພີອີກກອງນຶ່ງມາກອງໄວ້ຫ້ອງຮຽນ. ແລ້ວຖາມນັກຮຽນວ່າ

1. "ມີໃຜໃນພວກເຮົາບໍ່ມີພຣະຄັມພີ ເປັນຂອງສ່ວນຕົວ" ຫາກລາວບໍ່ມີແທ້ ຫາກໂບດມີຈິ່ງມອບໃຫ້ລາວ ຫາກໂບດບໍ່ມີ ແນະນຳໃຫ້ລາວໄປຊື້ ຫລືຖາມຕໍ່ຄຳຖາມທີ 2.

2. "ມີໃຜແດ່ມີພຣະຄັມພີຫລາຍກວ່າໜຶ່ງເຫລັ້ມ?" ຖ້າມີຄົນຕອບວ່າມີກວ່າໜຶ່ງເຫລັ້ມ ຈິ່ງຂໍນຳລາວແບ່ງໃຫ້ຜູ້ບໍ່ມີນັ້ນ, ແລ້ວຖາມຕໍ່ໄປວ່າ ທ່ານອ່ານພຣະຄັມພີເລື້ອຍປານໃດ? ຫາກມີຄົນຕອບວ່າອ່ານທຸກມື້ ຂໍໃຫ້ລາວເປັນພະຍານໃນການອ່ານແລະບໍ່ອ່ານລາວຮູ້ສຶກແນວໃດ?

3. ບອກນັກຮຽນວ່າ ເຮົາຈຳເປັນຈະຕ້ອງຝຶກຫັດໃຫ້ເປັນຄົນເຄັ່ງສິນທັມໂດຍກາຍແລະຮຽນພຣະຄັມພີເພື່ອຈະບໍ່ຖືກຫລອກລວງຈາກພວກຄຣູສອນປອມດັ່ງທີ່ໂປໂລໃຫ້ຕົວຢ່າງແກ່ຕີໂມທຽວດັ່ງນີ້.

ພວກສອນປອມສອນວ່າ "*ຫ້າມບໍ່ໃຫ້ເອົາກັນເປັນຜົວເມັຽ ຫ້າມບໍຣິໂພກອາຫານບາງຊະນິດຊຶ່ງ ພຣະເຈົ້າໄດ້ຊົງສ້າງໄວ້*" (ຂໍ້ 3). ແຕ່ພຣະທັມປະຖົມມະການ 2:18 ກ່າວວ່າ "*ບໍ່ເປັນການສົມຄວນທີ່ຈະໃຫ້ຊາຍຢູ່ໂດດດ່ຽວເຊັ່ນນີ້*" ແປວ່າຊາຍຍິງຕ້ອງແຕ່ງງານກັນ. ເຂົາຫ້າມບໍ່ໃຫ້ກິນອາຫານບາງຊະນິດ ແຕ່ປະຖົມມະການ 1:31 ທຸກສິ່ງທີ່ຊົງສ້າງນັ້ນດີພໍດີ. ດ້ວຍເຫດນີ້ແຫລະຫາກເຮົາບໍ່ອົດທົນພະຍາມສຶກສາເຮົາກໍຈະຫລົງເຊື່ອພວກສອນຜິດພຣະຄັມພີໄດ້ໂດຍງ່າຍ.

## ພລັງຂອງການຝຶກຫັດ (4:7-11).

ໂປໂລບອກແຈ້ງວ່າເປັນຫຍັງການນັບຖືພຣະເຈົ້າຢ່າງຖືກຕ້ອງມີປໂຍດທຸກຢ່າງ? ຄຳຕອບໃນຂໍ້ 8 ບອກວ່າ "*ເພາະໄດ້ຮັບພຣະສັນຍາໄວ້ສຳລັບຊີວິດໃນປັດຈຸບັນແລະໃນອະນາຄົດດ້ວຍ* " ແປວ່າ ເປັນປໂຍດໃນຊີວິດນີ້ແລະຍັງເປັນປໂຍດຕໍ່ຊີວິດໃນຟ້າສວັນອີກ ຫາກຮູ້ຈັກນັບຖືພຣະເຈົ້າຢ່າງຖືກຕ້ອງ. ນອກນັ້ນໂປໂລຍັງຢືນຢັນວ່າເຣື່ອງນີ້ເປັນຄວາມຈິງແລະຜູ້ທີ່ເຊື່ອຄວນຍຶດຖືໄວ້ " *ຂໍ້ຄວາມນີ້ກໍສັດຈິງ ແລະສົມຄວນທຸກຄົນຄວນຈະໄດ້ຮັບເຊື່ອເອົາໄວ້* "(ຂໍ້ 9).

ແຕ່ກ່ອນອື່ນເຮົາທັງຫລາຍຄວນຫລີກເວັ້ນນິຍາຍປະໂລມໂລກ ຫລືບໍ່ເວົ້າເຣື່ອງອື່ນນອກຈາກເຣື່ອງໃນພຣະຄັມພີ. " *ຈົ່ງເວັ້ນຫນີຈາກນິຍາຍປະໂລມໂລກ ທີ່ພວກຜູ້ຍິງເຖົ້າເຄີຍເລົ່າໃຫ້ຟັງນັ້ນ ແຕ່ຈົ່ງຝຶກຕົນໃນການນັບຖືພຣະເຈົ້າຢ່າງຖືກຕ້ອງ ເພາະການຝຶກຫັດທາງກາຍນັ້ນມີປໂຍດບາງຢ່າງ ແຕ່ການນັບຖືພຣະເຈົ້າຢ່າງຖືກຕ້ອງມີປໂຍດທຸກຢ່າງ* " (ຂໍ້ 7-8). ແປວ່າ

1. ຫລີກເວັ້ນເຣື່ອງບໍ່ມີແກ່ນສານຄວາມຈິງຫລືນິຍາຍຂອງພວກກຣີກ ດ້ວຍວ່ານິຍາຍເປັນເຣື່ອງທີ່ແຕ່ງຂຶ້ນຕາມຈິນຕະນາການຂອງຜູ້ແຕ່ງແລ້ວກໍມີພວກຜູ້ເຖົ້າເວົ້ານິທານໃຫ້ລູກຫລານຟັງເພື່ອຄວາມບັນເທີງ.
2. ຝຶກຕົນໃນການນັບຖືພຣະເຈົ້າຢ່າງຖືກຕ້ອງ ແມ່ນເລີ້ມຕົ້ນດ້ວຍການອ່ານແລະສຶກສາພຣະທັມຂອງພຣະເຈົ້າໃຫ້ເຂົ້າໃຈ ເມື່ອເຂົ້າໃຈຢ່າງຖືກຕ້ອງການປະຕິບັດນັບຖືຍ່ອມຈະຖືກຕ້ອງ.
3. ໂປໂລກ່າວເຖິງຜົນປໂຍດທາງກາຍມີປໂຍດບາງຢ່າງເທົ່ານັ້ນ ສ່ວນການນັບຖື ແປວ່າເຊື່ອຟັງນັ້ນມີປໂຍດທຸກຢ່າງ.

## ສ່ວນເລີກຂອງການຝຶກຫັດ (4:12-16).

ໂປໂລສອນວ່າ " *ຈົ່ງຕັ້ງໃຈໃນການອ່ານຫນັງສື ໃນການເຕືອນສະຕິ ແລະໃນການສັ່ງສອນ ຈົນກວ່າເຮົາຈະມາ ຢ່າເບີດເສີຍຕໍ່ຄຸນທັມທີ່ມີຢູ່ໃນຕົວເຈົ້າ ທີ່ໄດ້ຊົງປະທານແກ່ເຈົ້າດ້ວຍຄຳທຳນວາຍເມື່ອຄະນະເຖົ້າແກ່ ໄດ້ວາງມືໃສ່ເຈົ້າ* " (ຂໍ້ 15-16 ແປວ່າຕັ້ງໃຈອ່ານພຣະຄັມພີຢູ່ບໍ່ຂາດ ເພາະວ່າການອ່ານພຣະຄັມພີເປັນປະ ຈຳນັ້ນໄດ້ເພີ້ມເຕີມຄວາມຮູ້ແລະຄວາມເຊື່ອ. ຢ່າເບີດເສີຍຕໍ່ຄຸນນະທັມ ແປວ່າໃຫ້ເອົາໃຈໃສ່ໃນການສິດສອນຕົນເອງ ແລະສອນຄົນອື່ນຕາມສິ່ງທີ່ໄດ້ອ່ານໃນໜັງສືນັ້ນ.

*ທວ*

## ຄຳແນະນຳສຳລັບຄຣູສອນ
## ບົດຮຽນທີ 11
## <u>ພຣະເຈົ້າ ຫລື ເງິນຄຳ</u>

---

**<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u>** 1 ຕີໂມທຽວ 6:3-19

**<u>ພູມຫລັງຂອງພຣະຄັມພີ:</u>** 1 ຕີໂມທຽວ 6:3-19

**<u>ຈຸດສຳຄັນຂອງບົດຮຽນນີ້:</u>** ເພື່ອສອນໃຫ້ຄຣິສຕຽນຊອກສແວງຫາພຣະເຈົ້າຫລາຍກວ່າເງິນຄຳ, ແຕ່ຫາກມີຫລາຍກໍຄວນໃຊ້ມັນເພື່ອງານຂອງພຣະເຈົ້າ.

**<u>ຄຳຖາມເພື່ອການຄົ້ນຄວ້າ:</u>** ເຮົາໄດ້ໃຊ້ເງິນຄຳຂອງເຮົາຄືພຣະເຢຊູບໍ່?

**<u>ຈຸດປະສົງຂອງບົດຮຽນ</u>:** ເພື່ອຊ່ອຍໃຫ້ທ່ານໃຊ້ເງິນຄຳໃນການດີ ເພື່ອກຳໄລ.

## <u>ບົດນຳ</u>

ເຮົາມັກໄດ້ຍິນຄຣິສຕຽນຈົ່ມເຣື່ອງການຖວາຍສິບຣິດຢູ່ທຸກທີ່ນທຸກແຫ່ງ ຈົນເຮັດໃຫ້ລາງຄົນຍ້ານຮອດໄປໂບດ ເພາະບໍ່ກ້າຖວາຍສິບລົດທີ່ພຣະເຈົ້າທ້າທາຍ ເພື່ອຢາກໃຫ້ລູກຂອງພຣະອົງກາຍເປັນຄົນໄດ້ຮັບສິ່ງທີ່ພຣະເຈົ້າຕຽມຖອກເທພຣະພອນລົງມາໃຫ້, ຄຳທ້າທາຍນີ້ກໍຄ້າຍຄືເຮົາບອກສອນລູກໃຫ້ຮຽນໜັງສື ເມື່ອໃຫຍ່ມາຈະໄດ້ມີຄວາມຮູ້ແລ້ວມີວຽກງານການທຳດີ ແລ້ວຊີວິດກໍຈະສະບາຍ ແຕ່ລູກເຮົາມັກເວົ້າວ່າພໍ່ແມ່ບັງຄັບໃຫ້ເຂົາຮຽນ.

### <u>ພຣະເຢຊູ ຫລືປາຖນາເງິນຄຳ</u> (6:3-5).

ຫາກເຮົາຖາມຄຣິສຕຽນວ່າ ພຣະເຈົ້າແລະເງິນຄຳຈະເອົາອັນໃດ? ແນ່ນອນຕ້ອງມີການຖົກຖຽງກັນຢ່າງຍາວນານ, ແລະເຣື່ອງເງິນນີ້ເອງໄດ້ເຮັດໃຫ້ບັນດາອາຈານຫລາຍຄົນບໍ່ສະດວກໃນການເທສນາ ເພາະຫລາຍເທື່ອຄົນຈົ່ມວ່າ "ອາຈານ ເວົ້າແຕ່ເຣື່ອງເງິນ" ແຕ່ທ່ານອາຈານໂປໂລສັ່ງຕີໂມທຽວວ່າ " *ຈົ່ງສັ່ງສອນ ແລະເຕືອນສະຕິຂໍ້ຄວາມເຫລົ່ານີ້ ຖ້າຜູ້ໃດສອນຜິດໄປຈາກນີ້ ແລະບໍ່ຍອມເຫັນຕາມພຣະທັມອັນມີຫລັກຂອງພຣະເຢຊູຄຣິດເຈົ້າຂອງເຮົາທັງຫລາຍ ແລະຄຳໂອວາດທີ່ສົມກັບການນັບຖືພຣະເຈົ້າຢ່າງຖືກຕ້ອງ ຜູ້ນັ້ນກໍເປັນຄົນຈອງຫອງ* " (ຂໍ້ 3-4ກ). ດ້ວຍມີຄຳສັ່ງມາຈາກພຣະຄັມພີນີ້ເອງອາຈານຂອງທ່ານຈຶ່ງຕ້ອງເທສນາເຣື່ອງການຖວາຍຢ່າງນ້ອຍປີລະເທື່ອຫລືສອງເທື່ອ ເພື່ອທ່ານທັງຫລາຍຈະໄດ້ຮັບພຣະພອນຢ່າງຄົບຖ້ວນ.

ພຣະເຢຊູຊົງກ່າວວ່າ " *ເຫດວ່າຖ້າຜູ້ໃດຈະໄດ້ສິ່ງຂອງໝົດທັງໂລກ ແຕ່ຕ້ອງເສັຽຊີວິດອັນແທ້ຂອງຕົນ ຜູ້ນັ້ນຈະໄດ້ປໂຍດອັນໃດ ຫລືຜູ້ນັ້ນຈະນຳເອົາສິ່ງໃດໄປແລກເອົາຊີວິດອັນແທ້ຂອງຕົນກັບຄືນມາ*" (ມັດທາຍ 16: 26). ດ້ວຍເຫດນີ້ພຣະເຢຊູຈຶ່ງກ່າວອີກວ່າ " *ບໍ່ມີຜູ້ໃດສາມາດເປັນຂ້າສອງເຈົ້າບ່າວສອງນາຍ ເພາະຈະຊັງ*

*ນາຍຜູ້ນີ້ໄປຮັກນາຍຜູ້ນັ້ນ ຫລືຈະຕິດພັນຢູ່ກັບນາຍຜູ້ນີ້ແລະປມາດນາຍຜູ້ນັ້ນ ທ່ານຈະເປັນຂ້ອຍໃຊ້ຂອງພຣະເຈົ້າ ແລະຈະເປັນຂ້ອຍໃຊ້ຂອງເງິນຄຳພ້ອມກັນບໍ່ໄດ້* " (ມັດທາຍ 6:24).

## ຜົນກຳໄລອັນມະຫາສານ (ມັດທາຍ 6:6-10).

ພວກຄຣູສອນປອມສອນວ່າຜູ້ເຄັ່ງຄັດໃນສາສນາຈະກາຍເປັນຄົນຮັ່ງມີ ແຕ່ທ່ານອາຈານໂປໂລບອກຢ່າງແຈ້ງວ່າ " *ການນັບຖືພຣະເຈົ້າຢ່າງຖືກຕ້ອງນັ້ນ ໄດ້ກຳໄລອັນມະຫາສານແກ່ຜູ້ທີ່ມີຄວາມພໍໃຈກັບສິ່ງຂອງທີ່ຕົນມີຢູ່* " (ຂໍ້ 6). ເພາະວ່າພວກຜູ້ສອນປອມນັ້ນຫວັງໃຈຈະກາຍເປັນຄົນຮັ່ງມີໃນການຜູ້ນຳສາສນາ ດ້ວຍເຫດນີ້ ໂປໂລຈຶ່ງກ່າວ " *ສ່ວນຄົນເຫລົ່ານັ້ນທີ່ຢາກລ້ຳລວຍກໍຕົກໃນການທົດລອງ ໃນບ້ວງແຮ້ວ ແລະໃນຕັນຫາອັນໂງ່ຫລາຍຢ່າງ ຊຶ່ງ ເປັນໄພແກ່ຕົວທີ່ເຮັດໃຫ້ມະນຸດຈົມລົງໃນຄວາມວິນາດຈິບຫາຍເສື່ອມສູນໄປ*" (ຂໍ້ 9). ບໍ່ໄດ້ໝາຍຄວາມວ່າຄວາມຮັ່ງມີລ້ຳລວຍນັ້ນບໍ່ດີ ຫລືຕົກໃນບ້ວງແຮ້ວ ແຕ່ໝາຍຄວາມວ່າຄົນທີ່ບໍ່ຮູ້ຈັກພໍຢາກລ້ຳລວຍຕາມກິເລດຕັນຫາລາງເພື່ອກໍກາຍເປັນຄົນໂງ່ກໍເປັນໄດ້, ຕົວຢ່າງຄົນເຮົາຖືກຜູ້ອື່ນຕົວະຕົ້ມກໍແມ່ນຢາກລ້ຳຣວຍບໍ່ແມ່ນບໍ່? " *ເພາະວ່າການຮັກເງິນຄຳເປັນເຄົ້າມູນຂອງຄວາມຊົ່ວທຸກຢ່າງ ແລະເພາະເຫດຄວາມໂລບນີ້ແຫລະ ຈຶ່ງຊັກຈູງຜູ້ລາງຄົນໃຫ້ຫລົງໄປຈາກຄວາມເຊື່ອ ແລະແທງຕົວເອງຈົນຊອດດ້ວຍຄວາມເຈັບແສບຫລາຍປະການ*' (ຂໍ້ 10).

## ວິທີໄດ້ກຳໄລດີ (6:11-19)

ໂປໂລແນະນຳເຮົາທັງຫລາຍວ່າ " *ແຕ່ເຈົ້າຜູ້ເປັນຄົນຂອງພຣະເຈົ້າ ຈົ່ງຫລີກຫນີຈາກສິ່ງເຫລົ່ານີ້ແລະຈົ່ງຕິດຕາມຄວາມຊອບທັມ ຄວາມນັບຖືພຣະເຈົ້າຢ່າງຖືກຕ້ອງ ຄວາມສັດຊື່ ຄວາມຮັກ ຄວາມຫມັ້ນພຽນ ແລະຄວາມອ່ອນສຸພາບ ຈົ່ງອົດສາແຂ່ງຂັນສູ້ຕາມແນວທາງຂອງຄວາມເຊື່ອ ຈົ່ງຍຶດເອົາຊີວິດອັນຕລອດໄປເປັນນິດໄວ້ ຊຶ່ງພຣະເຈົ້າໄດ້ຊົງເອີ້ນໃຫ້ເຈົ້າຮັບນັ້ນ ໃນເມື່ອເຈົ້າໄດ້ຮັບເຊື່ອ ແລະປະຕິຍານຕົນຢ່າງດີຕໍ່ຫນ້າພະຍານຫລາຍຄົນ* " (ຂໍ້ 11-12). ແປວ່າ ຫລີກໜີຈາກການຮັກເງິນຄຳ ແລ້ວຕິດຕາມຄວາມຊອບທັມ ແລະນັບຖືປະຕິບັດຕາມຄຳສັ່ງສອນຂອງພຣະເຈົ້າ ໂດຍຮຽນເປັນຄົນສັດຊື່, ເປັນຄົນມີຄວາມຮັກໃນພຣະເຈົ້າ, ຮັກແບບພຣະເຢຊູຊົງຮັກ, ເປັນຄົນໝັ້ນພຽນໃນການເຂົ້າເຝົ້າພຣະເຈົ້າ, ເປັນຄົນອ່ອນສຸພາບໃນກິຣິຍາ ແລະວາຈາ, ເປັນຄົນອົດທົນຕໍ່ສູ່ໃນການເຮັດດີທຸກຢ່າງ ໂດຍຕັ້ງຫລັກໝັ້ນໃນເຣື່ອງຊີວິດອັນຕລອດໄປເປັນນິດ ທີ່ພຣະເຈົ້າຊົງຈັດໄວ້ໃຫ້ນັ້ນ ຫາກເຮົາປະຕິບັດຕາມຄຳແນະນຳທີ່ໂປໂລແນະນຳຕີໂມທຽວເຮົາກໍຈະປັນຜູ້ໄດ້ກຳໄລດີທີ່ສຸດແລ້ວ.

ພຣະເຢຊູຊົງກ່າວວ່າ "*ຢ່າຮີບໂຮມຊັບສົມບັດໄວ້ສຳລັບຕົນໃນໂລກ ຊຶ່ງເປັນບ່ອນມອດແລະຂີ້ໝ້ຽງກັດກິນ ແລະເປັນບ່ອນທີ່ໂຈນເຈາະເຂົ້າລັກເອົາໄດ້ ແຕ່ຈົ່ງຮີບໂຮມຊັບສົມບັດສຳລັບຕົນໄວ້ໃນສວັນບ່ອນມອດແລະຂີ້ໝ້ຽງກັດກິນບໍ່ໄດ້ ແລະທັງໂຈນເຈາະ ແລະລັກເອົາບໍ່ໄດ້*" (ມັດທາຍ 6:19-20). ແປວ່າໃຫ້ເຮົາໃຊ້ຊັບສົມບັດຂອງເຮົາເພື່ອວຽກງານຂອງພຣະເຈົ້າ, ເພື່ອການກຸສົນຕ່າງໆເຊິ່ງເຫັນແຈ້ງໃນຄຳສອນພຣະເຢຊູໃນພຣະທັມມັດທາຍ 25:31-46.

*ທວ*

## ຄຳແນະນຳສຳລັບຄຣູສອນ
## ບົດຮຽນທີ 12
## ຕື່ນເຖີດ ແລ້ວເດີນຕໍ່ໄປ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** 2 ຕີໂມທຽວ 1:6-14; 2:1-15

**ພູມຫລັງຂອງພຣະຄັມພີ:** 2 ຕີໂມທຽວ 1-2

**ຈຸດສຳຄັນຂອງບົດຮຽນນີ້:** ໂປໂລເຕືອນຕີໂມທຽວໃຫ້ຕັ້ງໃຈຮັບໃຊ້ ແລະຕັ້ງໃຈໃນຄວາມເຊື່ອ

**ຄຳຖາມເພື່ອການຄົ້ນຄວ້າ:** ທ່ານຕ້ອງການກຳລັງໃຈອັນໃດໃນວັນນີ້ເພື່ອຈະເຊື່ອແລະຕິດພຣະເຢຊູຕລອດໄປ?

**ຈຸດປະສົງຂອງບົດຮຽນ:** ເພື່ອຊ່ອຍທ່ານໃຫ້ຕື່ນຈາກຝັນແລ້ວຕັ້ງໜ້າຮັບໃຊ້ພຣະເຈົ້າ

## ບົດນຳ

ການປຸກໃຫ້ຕື່ນຈາກການນອນຫລັບນັ້ນ ແຕ່ລະຄົນມີເຄື່ອງປຸກບໍ່ຄືກັນ ຂຶ້ນກັບວ່າຜູ້ນັ້ນຢູ່ໃສ? ໃນສມັຍໃດ? ແຕ່ສ່ວນຫລາຍໃນເວລານີ້ຄົນເຮົາມັກຈະໃຊ້ໂມງປຸກ ສ່ວນຊີວິດຄຣິສຕຽນເດເຮົາຈະໃຊ້ອັນໃດປຸກເຮົາໃຫ້ຕື່ນແລ້ວທຳງານພຣະເຈົ້າຕໍ່ໄປ. ບົດຮຽນວັນນີ້ຕີໂມທຽວເອົາຈົດໝາຍໂປໂລເປັນເຄື່ອງປຸກໃຫ້ຕື່ນ.

### **ປຸກໃຫ້ຕື່ນໃນພຣະຢູຊູ** (2ຕີໂມທຽວ 1:6-7)

"*ເຫດສັນນັ້ນເຮົາຂໍເຕືອນສະຕິເຈົ້າໃຫ້ເປົ່າຄຸນທັມຂອງພຣະເຈົ້າ ທີ່ມີຢູ່ໃນເຈົ້າດ້ວຍການວາງມືຂອງເຮົານັ້ນໃຫ້ລຸກຮຸ່ງເຮືອງຂຶ້ນໃຫມ່ ເພາະວ່າພຣະເຈົ້າບໍ່ໄດ້ຊົງປະທານໃຈອັນຢ້ານກົວໃຫ້ແກ່ເຮົາແຕ່ໄດ້ຊົງປະທານໃຈອັນປະກອບດ້ວຍຣິດອຳນາດ ຄວາມຮັກ ແລະການບັງຄັບຕົນໃຫ້ແກ່ເຮົາ*" (ຂໍ້ 6-7). ຄຳຕັກເຕືອນທີ່ໂປໂລເຕືອນຕີໂມທຽວຄັ້ງນີ້ ຍັງເປັນເປັນຄຳເຕືອນມາເຖິງພວກເຮົາຜູ້ເປັນສິດຍາພິບານ, ອາຈານ, ພວກຜູ້ປົກຄອງ ແລະຜູ້ຮັບໃຊ້ທົ່ວໄປໃຫ້ເຮົາເຮັດແນວດຽວກັນຄື;

1. ປຸກຈິດວິນຍານໃຫ້ຕື່ນ ແລະຣະວັງຕົວສເມີ ໂດຍເປົ່າໄຟຈິດວິນຍານທີ່ພຣະເຈົ້າປະທານໃຫ້ນັ້ນໃຫ້ຮ້ອນແຮງກ້າຄືຊ່າງຕີເຫລັກເປົ່າລົມໃສ່ເຕົາເຫລັກນັ້ນ.
2. ບໍ່ໃຫ້ຢ້ານກົວຕໍ່ເຫດການທີ່ເກີດຂຶ້ນໂດຍໃຫ້ປະກາດທຸກເຫດການ ດ້ວຍຄວາມຮັກ.
3. ສິ່ງສຳຄັນອີກປະການນຶ່ງແມ່ນຕ້ອງເປັນຄົນທີ່ຢູ່ໃນວິນັຍໂດຍມີຊີວິດເປັນແບບຢ່າງເພື່ອເປັນແສງສະຫວ່າງສຳລັບຄົນທົ່ວໄປ.

### **ຈົ່ງກວ່າຈະຜ່ານຜ່າບັນຫາ** (2ຕີໂມທຽວ 1:8-14)

1. ບໍ່ມີຄຣິສຕຽນຜູ້ໃດຢູ່ໂດດດ່ຽວ, ໂປໂລເວົ້າວ່າ "*ຝ່າຍຕົວເຮົາທີ່ຖືກຈຳຈອງຢູ່ເພາະເຫັນແກ່ພຣະອົງ ແຕ່ຈົ່ງມີສ່ວນໃນການລຳບາກເພື່ອເຫັນແກ່ຂ່າວປະເສີດ ໂດຍອາສັຍຣິດອຳນາດແຫ່ງພຣະເຈົ້າ*" (ຂໍ້ 8). ແປວ່າໂປ

ໂລເອງໄດ້ຖືກຈໍາຈອງຢູ່ກັບພຣະເຢຊູຄຣິດ ແລະພຣະເຢຊູຄຣິດກໍຢູ່ກັບເພິ່ນ ເມື່ອເປັນດັ່ງນັ້ນໂປໂລຈຶ່ງຊັກຊວນຕີໂມທຽວໃຫ້ຮ່ວມການຖືກຈໍາຈອງນີ້ເພື່ອຈະຢູ່ກັບພຣະເຢຊູຄຣິດ ແລະພຣະເຢຊູຄຣິດຊີງຢູ່ດ້ວຍ. ການເຮັດດັ່ງນີ້ຈະບໍ່ໄດ້ຢູ່ໂດດດ່ຽວ.

2. ແນ່ໃຈວ່າພຣະເຈົ້າຊົງເອີ້ນ. ໃນການຖືກຊົງເອີ້ນນີ້ໂປໂລໄດ້ວາງເງື່ອນໄຂໃຫ້ຟັງ 5 ຢ່າງຄື;

ກ. ພຣະເຈົ້າຊົງໃຫ້ກໍາລັງໃນການຜ່ານຜ່າອຸປະສັກບັນຫາ.

ຂ. ຄວາມລອດພົ້ນເປັນຫລັກຄໍ້າປະກັນເພື່ອຜ່ານຜ່າອຸປສັກຊົ່ວຄາວນີ້.

ຄ. ຊົງເອີ້ນຄຣິສຕຽນແຕ່ລະຄົນຈາກຫລັກພື້ນຖານຕ່າງໆນາໆ.

ງ. ພຣະປະສົງຂອງພຣະເຈົ້າໃຫ້ທ່ານເຂົ້າໄປສວັນຊຶ່ງຍິ່ງໃຫຍ່ກວ່າບັນຫາ.

ຈ. ພຣະຄຸນພຣະເຈົ້າຍິ່ງໃຫຍ່ກວ່າທຸກສິ່ງໃນໂລກ.

3. ເຫດຜົນທີ 3 ແມ່ນການປະກາດຂ່າວປະເສີດນັ້ນຄຸ້ມຄ່າໃນການສ່ຽງພັຍ (ຂໍ້ 10-14).

## ຈົ່ງດໍາເນີນຮັບໃຊ້ໂດຍມີວິນັຍ (2ຕີໂມທຽວ 2:1-15)

**1.** ຂໍ້ 1. ຕ້ອງເປັນຄົນເຂັ້ມແຂງດ້ວຍພຣະຄຸນ, ແປວ່າໃຫ້ຮູ້ເສັ້ງວ່າທ່ານຖືກເລືອກມາກໍດ້ວຍພຣະຄຸນພຣະເຈົ້າ, ບໍ່ແມ່ນຍ້ອນການດີ ຫລືຊົ່ວທີ່ເຮົາກະທໍາ ດັ່ງນັ້ນເມື່ອຄິດເຫັນພຣະຄຸນກໍຈະເຂັ້ມແຂງ. ເພາະວ່າທະຫານຈໍາເປັນຈະຕ້ອງເປັນຄົນເຂັ້ມແຂງ, ໃນການເຂັ້ມແຂງທີ່ໂປໂລກ່າວນີ້ມີສາມຢ່າງຄື;

ກ. ຄວາມນຶກຄິດ mind. ຂ. ຊີວິດຈິດໃຈ Spirit. ຄ. ຈິດວິນຍານ Soul.

ຄົນທີ່ເຂັ້ມແຂງຈະຢືນຕໍ່ສູ້ກັບອຸປະສັກໂດຍບໍ່ໜີໜ້າແລະແລ້ວລາວກໍຜ່ານພົ້ນໄດ້, ສ່ວນຄົນທີ່ເຂັ້ມແຂງກວ່າຍັງຊ່ວຍຜູ້ອື່ນໄດ້ອີກ ດ້ວຍເຫດນີ້ໂປໂຈຈຶ່ງສັ່ງຕີໂມທຽວໃຫ້ຢູ່ໃນວິນັຍນີ້ເພື່ອຈະຊ່ວຍຕົນເອງແລະຜູ້ອື່ນໄດ້.

**2.** ຂໍ້ 2. ເປັນຄົນທີ່ໄດ້ຮັບໜ້າທີ່ມອບໝາຍ, ແປວ່າມີໜ້າທີ່ໃນການສິດສອນແລະນໍາຜູ້ອື່ນ ແຕ່ຈະຕ້ອງເປັນຜູ້ເບິ່ງຢ່າງຮອບດ້ານໃນການທີ່ຈະມອບຄໍາສອນຫລືສອນຜູ້ອື່ນໃຫ້ເປັນຜູ້ຮັບໃຊ້ພຣະເຈົ້າຕໍ່ໄປ

**3.** ຂໍ້ 3-4. ເປັນຜູ້ມີສ່ວນຮ່ວມທຸກດ້ວຍຄວາມກ້າຫານ, ແປວ່າຜູ້ທີ່ມີໜ້າທີ່ມອບໝາຍຈະຕ້ອງທົນທຸກ. ໂປໂລໄດ້ຍົກເອົາຕົວຢ່າງທະຫານມາໃຫ້ເຫັນຄວາມກ້າຫານ ແຕ່ທະຫານທຸກຄົນມີຣະບຽບວິນັຍໃນການຕໍ່ສູ້ແລະປ້ອງກັນຕົວ ບໍ່ແມ່ນຈະເຮັດຕາມໃຈ, ດ້ວຍເຫດນີ້ຄຣິສຕຽນຈໍາເປັນຈະຕ້ອງມີທຸກຍາກລໍາບາກໃນການປະກາດຂ່າວປະເສີດ ແຕ່ຄຣິສຕຽນທີ່ເຂັ້ມແຂງນັ້ນຈະບໍ່ເຊົາເມື່ອພົບກັບບັນຫາ.

**4.** ຂໍ້ 4 ໂປໂລເວົ້າເຖິງຄົນສາມຄົນທີ່ຄຣິສຕຽນຈະຕ້ອງເປັນຄື;

ກ. ທະຫານ

ຂ. ນັກກິລາ

ຄ. ຊາວນາ

5. ອະທິບາຍ ຂໍ້ 7-15 ໃນບົດຮຽນ. *ທວ*

## ຄຳແນະນຳສຳລັບຄຣູສອນ
## ບົດຮຽນທີ 13
## ຄວາມຫວັງຂ້າງໜ້າ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** 2 ຕີໂມທຽວ 4:1-8, 16-18

**ພູມຫລັງຂອງພຣະຄັມພີ:** 2 ຕີໂມທຽວ 4

**ຈຸດສຳຄັນຂອງບົດຮຽນນີ້:** ໃຫ້ຮູ້ວ່າຄວາມຫວັງຍັງລໍຄອຍຢູ່ຂ້າງໜ້າ

**ຄຳຖາມເພື່ອການຄົ້ນຄວ້າ:** ເຮົາຈະປາບຄວາມຕໍ່າຕ້ອຍນ້ອຍໃຈເວລານີ້ໄດ້ແນວໃດ?

**ຈຸດປະສົງຂອງບົດຮຽນ:** ເພື່ອຊ່ອຍທ່ານໃຫ້ເຂົ້າໃຈວ່າພຣະເຈົ້າຊົງຫ່ວງໃຍທ່ານສເມີ.

### ບົດນຳ

ທຸກຄັ້ງເມື່ອເຮົາທໍ້ໃຈເຮົາກໍເປັນຄືຣົດຄັນໃໝ່ໆທີ່ກຳລັງໝົດນໍ້າມັນຈອດຂ້າງທາງນັ້ນເອງ, ສ່ວນຄວາມຫວັງໃນພຣະເຈົ້າກໍເປັນຄືນໍ້າມັນທີ່ເຕີມໃສ່ຣົດທີ່ກຳລັງຈອດຢູ່ແຄມທາງນັ້ນ. ພຣະວິນຍານບໍຣິສຸດຍິ່ງກວ່ານໍ້າມັນທີ່ເຕີມໃສ່ຣົດ ເຮົາທັງຫລາຍຄວນເຕີມພຣະວິນຍານບໍຣິສຸດທຸກໆວັນເພື່ອຄວາມຫວັງຂອງເຮົາຈະຕັ້ງໝັ້ນຄົງ.

### ຄວາມຫວັງຢູ່ຂ້າງໜ້າ (4:1-5).

ທ່ານອາຈານໂປໂລມີບັນຫາເຣື່ອງການຮັບໃຊ້ຢ່າງໜັກໜ່ວງ ແຕ່ເພິ່ນໃຊ້ຫ້າປະການນີ້ເພື່ອດຳເນີນຕໍ່ໄປ;

1. ຂໍ້ 1ກ. ເຮົາທັງຫລາຍຢູ່ຕໍ່ພຣະພັກພຣະຈົ້າຜູ້ຊົງສ້າງສັພສິ່ງ ແລະເຂົ້າໃຈທຸກສິ່ງໃນຊີວິດເຮົາ.
2. ຂໍ້ 1ຂ. ເຮົາທັງຫລາຍຢູ່ຕໍ່ໜ້າພຣະເຢຊູພຣະບຸດອົງດຽວທີ່ລົງມາເປັນພຣະຜູ້ໄຖ່.
3. ຂໍ້ 1ຄ. ພຣະເຈົ້າແລະພຣະເຢຊູ ຈະຊົງເປັນຜູ້ພິພາກສາໃນຄາວສຸດທ້າຍ.
4. ຂໍ້ 1ງ. ພຣະເຢຊູຈະຊົງມາປາກົດອີກໃນຄາວສຸດທ້າຍ, ເພາະວ່າເວລາທີ່ພຣະອົງຊົງຄືນພຣະຊົນນັ້ນພຣະອົງໄດ້ສະເດັດກັບໄປສູ່ສວັນຈົນເຖິງປັຈຸບັນນີ້ຍັງບໍ່ມີຜູ້ໃດເຫັນພຣະອົງ ແລະວັນສຸດທ້າຍທຸກຄົນໃນໂລກຈະເຫັນພຣະອົງ ແລະຈະກົ້ມຂາບລົງທີ່ພຣະບາດພຣະອົງ. " *ທຸກຄົນຈະຄຸເຂົ່າລົງຂາບໄຫວ້ເຮົາ ແລະທຸກສິ່ງຈະສັຣເສີນພຣະເຈົ້າ* " (ໂຣມ 14:11).
5. ຂໍ້ 1ຈ. ອານາຈັກຂອງພຣະອົງ ສ້າງໄວ້ສຳລັບຜູ້ທີ່ເຊື່ອໃນພຣະອົງ.

### ຄວາມຫວັງສຳເຣັດ ( ຂໍ້ 6-8).

1. ນັກຮຽນ, ນັກສຶກສາ, ຈະສຳເຣັດເມື່ອຮຽນຕໍ່ໄປໂດຍບໍ່ອອກໂຮງຮຽນຈົນກວ່າຈະຮຽນຈົບ, ນັກກິລາແລ່ນທົນ ຈະສຳເຣັດເມື່ອລາວແລ່ນດ້ວຍກະຕິກາແລະໃຊ້ຄວາມອົດທົນແລ່ນຈົນເຖິງຫລັກຊັຍຈຶ່ງຖືວ່າສຳເຣັດ, ຄຣິສຕຽນຈະຕ້ອງດຳເນີນຊີວິດຕາມແບບແຜນຂອງພຣະເຈົ້າທີ່ວາງໄວ້ໃຫ້ຈົນເຖິງວັນຈາກໂລກນີ້ໄປແລ້ວໄປຢູ່ກັບພຣະເຈົ້າຈຶ່ງຖືວ່າສຳເຣັດ. ໂປໂລກ່າວວ່າ " *ເພາະວ່າຝ່າຍຕົວເຮົາ ກຳລັງຈະຕົກເປັນເຄື່ອງບູຊາຢູ່ແລ້ວ*

*ແລະເຖິງເວລາແລ້ວທີ່ເຮົາຈະຈາກໄປ*" (ຂໍ້ 6) ແປວ່າທ່ານພ້ອມທີ່ຈະຕາຍເພື່ອໃຫ້ຄົນທັງຫລາຍມີໂອກາດໄດ້ຍິນ, ໄດ້ຟັງ ແລະຮັບເຊື່ອໃນພຣະເຢຊູຄຣິດ.

2. ຂໍ້ 7-8 ໂປໂລໄດ້ກ່າວເຖິງຄວາມບາກບັ່ນອົດທົນວ່າ "*ເຮົາໄດ້ອົດສາສູ້ໃນການແຂ່ງຂັນ ເຮົາໄດ້ແລ່ນແຂ່ງຂັນຈົນເຖິງທີ່ສຸດ ເຮົາໄດ້ຮັກສາຄວາມເຊື່ອໄວ້ແລ້ວແຕ່ນີ້ຕໍ່ໄປພວງມາລັຍຄືລາງວັນແຫ່ງຄວາມຊອບທັມ ຊົງຈັດໄວ້ຖ້າເຮົາແລ້ວ ຊຶ່ງອົງພຣະຜູ້ເປັນເຈົ້າຜູ້ພິພາກສາອັນຍຸດຕິທັມ ຈະຊົງປະທານແກ່ເຮົາໃນວັນນັ້ນ ແລະບໍ່ແມ່ນແກ່ເຮົາຜູ້ດຽວ ແຕ່ຈະຊົງປະທານແກ່ຄົນທັງປວງທີ່ມີໃຈຍິນດີໃນການຊົງສ່ອງສວ່າງມາປາກົດຂອງພຣະອົງ*" ແປວ່າກຳລັງຕໍ່ສູ້ແບບຖືກຕ້ອງຕາມຫລັກກະຕິກາທຸກຢ່າງ ໂດຍຕັ້ງເປົ້າໝາຍຈະໄດ້ຮັບລາງວັນຄວາມຊອບທັມໃນພຣະເຈົ້າຜູ້ຊົງເປັນຜູ້ຕັດສິນດ້ວຍຄວາມສັດຊື່ແລະທ່ຽງທັມ ໂປໂລເຊື່ອວ່າພຣະເຈົ້າໄດ້ຊົງຈັດຕຽມມົງກຸດໃຫ້ແກ່ທຸກຄົນທີ່ໄວ້ວາງໃຈເຊື່ອໃນພຣະອົງ.

## <u>ຫວັງໃນພຣະເຈົ້າ</u> (4:16-18).

1. ເວົ້າເຣື່ອງນາງມາທາ ແລະນາງມາຣີອາ ທີ່ເວົ້າກັບພຣະເຢຊູວ່າ " *ຖ້າທ່ານຢູ່ທີ່ນີ້ນ້ອງຊາຍຂອງຂ້ານ້ອຍຄົງບໍ່ຕາຍ* " (ໂຢຮັນ 11:17-27).

2. ເນັ້ນໜັກຂໍ້ 25- 26 ທີ່ຊົງກ່າວວ່າ " *ເຮົານີ້ແຫລະ, ເປັນເຫດໃຫ້ຄົນທັງປວງເປັນຄືນມາ ທັງເປັນຊີວິດ ຜູ້ທີ່ວາງໃຈເຊື່ອໃນເຮົາ ເຖິງແມ່ນວ່າຕາຍໄປແລ້ວກໍຍັງຈະມີຊີວິດຢູ່ ແລະທຸກຄົນທີ່ຍັງມີຊີວິດຢູ່ແລະວາງໃຈເຊື່ອຢູ່ໃນເຮົາກໍຈະບໍ່ຕາຍຈັກເທື່ອ* ".

3. ທ່ານອາຈານໂປໂລໄດ້ຈົ່ມແລະນ້ອຍໃຈເມື່ອເຫັນເພື່ອນຮ່ວມງານປະຖິ້ມເພິ່ນໃນເວລາຂຶ້ນສານ. ໂປໂລກ່າວວ່າ " *ເມື່ອເຮົາໄດ້ເວົ້າແກ້ຄະດີເທື່ອທຳອິດນັ້ນບໍ່ມີໃຜເຂົ້າຂ້າງເຮົາຈັກຄົນ ທຸກຄົນໄດ້ປະຖິ້ມເຮົາຫມົດ (ຂໍຢ່າຊົງຖືເປັນໂທດແກ່ເຂົາ)* " (ຂໍ້ 16). ໂປໂລໄດ້ຈົ່ມໃຫ້ພວກພີ່ນ້ອງຄຣິສຕຽນ, ເພື່ອນຄຣິສຕຽນດ້ວຍກັນທີ່ໜີເອົາຕົວລອດແຕ່ເພິ່ນຍັງຢ້ານພຣະເຈົ້າລົງໂທດພວກທີ່ປະຖິ້ມເພິ່ນ, ແຕ່ເພິ່ນໄດ້ອ້ອນວອນຕໍ່ພຣະເຈົ້າວ່າ " *ຂໍຢ່າຖືໂທດເຂົາ* ". ແປວ່າ ຂໍຊົງອະພັຍເຂົາເທີ້ນ.

4. ເມື່ອຖືກໝູ່ຄູ່ປະຖິ້ມ, ໂປໂລຈຶ່ງຕັ້ງຄວາມຫວັງໃນອົງພຣະຜູ້ເປັນເຈົ້າເທົ່ານັ້ນ. ໂປໂລກ່າວວ່າ " *ແຕ່ອົງພຣະຜູ້ເປັນເຈົ້າໄດ້ຊົງເຂົ້າຂ້າງເຮົາ ແລະຊົງຊູກຳລັງຂອງເຮົາຂຶ້ນ ໃຫ້ເຮົາປະກາດພຣະທັມຢ່າງຄົບຖ້ວນເພື່ອໃຫ້ພວກຕ່າງຊາດທັງຫມົດໄດ້ຍິນ ແລະອົງພຣະຜູ້ເປັນເຈົ້າໄດ້ຊົງໂຜດໃຫ້ເຮົາຫລຸດພົ້ນຈາກປາກສິງໂຕນັ້ນ* " (ຂໍ່ 17). ເຮົາອາດຈະຖືກຜູ້ທີ່ຮັກເຮົາປະຖິ້ມ ແຕ່ພຣະເຈົ້າບໍ່ປະຖິ້ມເຮົາຈັກເທື່ອ.

*ຫວ*